ສາລະບານ

ມະຕິຕົກລົງ ........ 5
ລັດຖະດຳລັດ ........ 6
ກົດໝາຍ ວ່າດ້ວຍກະສິກຳ ........ 7
ພາກທີ I ບົດບັນຍັດທົ່ວໄປ ........ 7
ມາດຕາ 1. ໜ້າທີ່ຂອງກົດໝາຍ ........ 7
ມາດຕາ 2. ກະສິກຳ ........ 7
ມາດຕາ 3. ການສົ່ງເສີມການຜະລິດກະສິກຳ ........ 7
ມາດຕາ 4. ການປົກປ້ອງສິດຜົນປະໂຫຍດ ຂອງຜູ້ດຳເນີນກິດຈະການກະສິກຳ ........ 8
ມາດຕາ 5. ການປົກປັກຮັກສາທີ່ດິນກະສິກຳ ........ 8
ມາດຕາ 6. ການປົກປັກຮັກສາສິ່ງແວດລ້ອມ ........ 8
ມາດຕາ 7. ການຮ່ວມມືສາກົນທາງດ້ານກະສິກຳ ........ 8
ພາກທີ II ກິດຈະການກະສິກຳ ........ 8
ມາດຕາ 8. ກິດຈະການກະສິກຳ ........ 8
ມາດຕາ 9. ປະເພດກິດຈະການກະສິກຳ ........ 8
ມາດຕາ 10. ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການກະສິກຳ ........ 9
ໝວດທີ 1 ທີ່ດິນກະສິກຳ ........ 9
ມາດຕາ 11. ການນຳໃຊ້ທີ່ດິນກະສິກຳ ........ 9
ມາດຕາ 12. ປະເພດທີ່ດິນກະສິກຳ. ........ 9
ມາດຕາ 13. ການຫັນປ່ຽນທີ່ດິນກະສິກຳ. ........ 10
ມາດຕາ 14. ການປັບປຸງ ທີ່ດິນກະສິກຳ. ........ 10
ມາດຕາ 15. ເງື່ອນໄຂການນຳໃຊ້ທີ່ດິນກະສິກຳ ........ 10
ໝວດທີ 2 ຊົນລະປະທານ ........ 10
ມາດຕາ 16. ຊົນລະປະທານ. ........ 10
ມາດຕາ 17. ການນຳໃຊ້ຊົນລະປະທານ. ........ 11
ມາດຕາ 18. ການກໍ່ສ້າງ ແລະ ການຄຸ້ມຄອງຊົນລະປະທານ. ........ 11
ມາດຕາ 19. ອ່າງເກັບນ້ຳ ........ 11
ມາດຕາ 20. ຝາຍນ້ຳລົ້ນ ........ 12
ມາດຕາ 21. ການສູບນ້ຳ ........ 12
ມາດຕາ 22. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມທຳມະຊາດ ........ 12
ມາດຕາ 23. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມກົດໝາຍ ........ 12
ໝວດທີ 3 ແນວພັນພືດແລະແນວພັນສັດ ........ 13
ມາດຕາ 24. ແນວພັນພືດ ........ 13
ມາດຕາ 25. ແນວພັນສັດ ........ 13

ມາດຕາ 26. ການນຳໃຊ້ແນວພັນ....................................................................13
ໝວດທີ 4 ຝຸ່ນ ແລະອາຫານສັດ....................................................................13
ມາດຕາ 27. ຝຸ່ນ....................................................................13
ມາດຕາ 28. ປະເພດຝຸ່ນ....................................................................13
ມາດຕາ 29. ການນຳໃຊ້ຝຸ່ນ....................................................................14
ມາດຕາ 30.  ອາຫານສັດ....................................................................14
ມາດຕາ 31. ການຄຸ້ມຄອງຝຸ່ນ ແລະ ອາຫານສັດ....................................................................14
ໝວດທີ 5 ຢາປາບສັດຕູພືດ ແລະ ຢາປົວສັດ....................................................................15
ມາດຕາ 32. ຢາປາບສັດຕູພືດ....................................................................15
ມາດຕາ33. ຢາປົວສັດ....................................................................15
ມາດຕາ 34. ການນຳໃຊ້ຢາປາບສັດຕູພືດ ແລະ ຢາປົວສັດ....................................................................15
ມາດຕາ 35. ການຄຸ້ມຄອງຢາປາບສັດຕູພືດ ແລະ ຢາປົວສັດ....................................................................15
ໝວດທີ 6 ເຄື່ອງມື ແລະ ພາຫະນະກົນຈັກການກະເສດ....................................................................16
ມາດຕາ36.ເຄື່ອງມືແລະພາຫະນະກົນຈັກການກະເສດ....................................................................16
ມາດຕາ 37. ການຜະລິດເຄື່ອງມື ແລະ ພາຫະນະກົນຈັກການກະເສດ....................................................................16
ໝວດທີ 7 ສາງເກັບມ້ຽນ....................................................................16
ມາດຕາ 38. ສາງເກັບມ້ຽນ....................................................................16
ມາດຕາ 39. ການສ້າງສາງເກັບມ້ຽນ....................................................................16
ໝວດທີ 8 ການປຸງແຕ່ງຜົນຜະລິດກະສິກຳ....................................................................17
ມາດຕາ 40. ການປຸງແຕ່ງຜົນຜະລິດກະສິກຳ....................................................................17
ມາດຕາ 41. ການສ້າງໂຮງຫັດຖະກຳ ແລະໂຮງງານປຸງແຕ່ງຜົນຜະລິດກະສິກຳ....................................................................17
ໝວດທີ 9 ຕະຫລາດກະສິກຳ....................................................................17
ມາດຕາ 42. ຕະຫລາດກະສິກຳ....................................................................17
ມາດຕາ 43. ການສ້າງຕະຫລາດກະສິກຳ....................................................................17
ໝວດທີ 10 ການພົວພັນຮ່ວມມືກັບຕ່າງປະເທດທາງດ້ານກະສິກຳ....................................................................17
ມາດຕາ 44. ການພົວພັນຮ່ວມມືກັບຕ່າງປະເທດ ທາງດ້ານເຕັກນິກ....................................................................17
ມາດຕາ 45. ການພົວພັນຮ່ວມມືກັບຕ່າງປະເທດທາງດ້ານເສດຖະກິດ....................................................................18
ພາກທີ III ການລົງທຶນໃສ່ກິດຈະການກະສິກຳ....................................................................18
ມາດຕາ 46. ການລົງທຶນໃສ່ກິດຈະການກະສິກຳ.....................................................................18
ມາດຕາ 47. ຮູບການລົງທຶນ....................................................................18
ພາກທີ IV  ການສົ່ງເສີມການຜະລິດກະສິກຳ....................................................................19
ມາດຕາ 48. ຈຸດປະສົງ....................................................................19
ມາດຕາ 49. ເນື້ອໃນຂອງການສົ່ງເສີມການຜະລິດກະສິກຳ....................................................................19
ມາດຕາ 50. ທຶນ ແລະ ກອງທຶນສົ່ງເສີມ....................................................................19

ມາດຕາ 51. ແນວພັນພືດ ແລະ ແນວພັນສັດ ....20
ມາດຕາ 52. ຝຸ່ນ ແລະ ອາຫານສັດ ....20
ມາດຕາ 53. ຢາປາບສັດຕູພືດ ແລະ ຢາປົວສັດ ....20
ມາດຕາ 54. ເຄື່ອງມື ແລະ ພາຫະນະກົນຈັກການກະເສດ ....21
ມາດຕາ 55. ຊົນລະປະທານ ....21
ມາດຕາ 56. ວິຊາການ ....21
ມາດຕາ 57. ຂໍ້ມູນຂ່າວສານ ທາງດ້ານກະສິກໍາ ....21
ມາດຕາ 58. ສູນຄົ້ນຄວ້າ ແລະ ສະຖານີທົດລອງ ....22
ມາດຕາ 59. ການຝຶກອົບຮົມຊາວກະສິກອນ ....22
ມາດຕາ 60. ສາງ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງ ....22
ມາດຕາ 61. ທະນາຄານເມັດພືດ ແລະ ທະນາຄານສັດ ....22
ມາດຕາ 62. ການຕະຫລາດ ....23
ມາດຕາ 63. ລາຄາ ....23
ມາດຕາ 64. ການປົກປ້ອງຜົນປະໂຫຍດຂອງຊາວກະສິກອນ ....23
ພາກທີ V ການປົກປັກຮັກສາສິ່ງແວດລ້ອມ ....24
ມາດຕາ 65. ການປົກປັກຮັກສາສິ່ງແວດລ້ອມ ....24
ມາດຕາ 66. ການປົກປັກຮັກສາສິ່ງແວດລ້ອມໃນການປູກຝັງ ....24
ມາດຕາ 67. ການປົກປັກຮັກສາສິ່ງແວດລ້ອມໃນການລ້ຽງສັດ ....24
ມາດຕາ 68 ການປົກປັກຮັກສາສິ່ງແວດລ້ອມໃນ ການ ປະມົງ ....24
ພາກທີ VI ການຄຸ້ມຄອງ ແລະກວດກາກິດຈະການກະສິກໍາ ....24
ຫມວດທີ 1 ການຄຸ້ມຄອງກິດຈະການກະສິກໍາ ....24
ມາດຕາ 69. ອົງການຄຸ້ມຄອງກິດຈະການກະສິກໍາ ....24
ມາດຕາ 70. ສິດ ແລະ ຫນ້າທີ່ຂອງ ກະຊວງກະສິກໍາ ແລະ ປ່າໄມ້ ....25
ມາດຕາ 71. ສິດ ແລະ ຫນ້າທີ່ຂອງ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ກໍາແພງນະຄອນແລະ ເຂດພິເສດ ....26
ມາດຕາ 72. ສິດ ແລະ ຫນ້າທີ່ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ....26
ມາດຕາ 73. ສິດ ແລະ ຫນ້າທີ່ຂອງອໍານາດການປົກຄອງບ້ານ ....27
ຫມວດທີ 2 ການກວດກາກິດຈະການກະສິກໍາ ....27
ມາດຕາ 74. ການກວດກາກິດຈະການກະສິກໍາ ....27
ມາດຕາ 75. ອົງການກວດກາກິດຈະການກະສິກໍາ ....27
ມາດຕາ 76. ເນື້ອໃນການກວດກາ ....27
ມາດຕາ 77. ວິທີການກວດກາ....28
ພາກທີ VII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ....28
ມາດຕາ 78. ນະໂຍບາຍຕໍ່ຜູ້ມີຜົນງານ ....28

ມາດຕາ 79. ມາດຕະການ ຕໍ່ຜູ້ລະເມີດ ........................................................................................ 28
ມາດຕາ 80. ມາດຕະການສຶກສາອົບຮົມ ........................................................................................ 28
ມາດຕາ 81. ມາດຕະການປັບໃໝ ........................................................................................ 29
ມາດຕາ 82. ມາດຕະການ ທາງອາຍາ ........................................................................................ 29
ມາດຕາ 83. ມາດຕະການໂທດເພີ່ມ ........................................................................................ 29
ພາກທີ VIII ບົດບັນຍັດສຸດທ້າຍ ........................................................................................ 30
ມາດຕາ 84. ການຈັດຕັ້ງປະຕິບັດ ........................................................................................ 30
ມາດຕາ 85. ຜົນສັກສິດ ........................................................................................ 30

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 01-98 /ສພຊ

# ມະຕິຕົກລົງ

**ຂອງສະພາແຫ່ງຊາດແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍກະສິກຳ**

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

- ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 63 /ນຍ, ລົງວັນທີ 31 ສິງຫາ 1998;

ພາຍຫລັງທີ່ໄດ້ຄົ້ນຄ້ວາພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ກະສິກຳ ໃນກອງປະຊຸມເທື່ອທີ 2 ສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ IV, ໃນວາລະປະຊຸມຕອນບ່າຍຂອງວັນທີ 10 ຕຸລາ 1998 ກອງປະຊຸມໄດ້.

**ຕົກລົງ:**

<u>ມາດຕາ 1</u>: ຮັບຮອງເອົາກົດໝາຍວ່າດ້ວຍ ກະສິກຳ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

<u>ມາດຕາ 2</u>: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 10 ຕຸລາ 1998

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ.

ເລກທີ 105 ສປປ.

# ລັດຖະດຳລັດ

## ຂອງປະທານປະເທດ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍກະສິກຳ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 1;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 01-98/ສພຊ ລົງວັນທີ 10 ຕຸລາ 1998 ໃນກອງປະຊຸມເທື່ອທີ 2 ສະໄໝສາມັນຊຸດທີ IV ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍກະສິກຳ.
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ່ 13/ຄປຈ, ລົງວັນທີ່ 15 ຕຸລາ 1998.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ອອກລັດຖະດຳລັດ:**

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍກະສິກຳ.

ມາດຕາ 2: ລັດຖະດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 06 ພະຈິກ 1998

ປະທານປະເທດ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01/98 ສພຊ

ວັນທີ 10/10/1998

# ກົດໝາຍ ວ່າດ້ວຍກະສິກຳ

## ພາກທີ I ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງກົດໝາຍ**

ກົດໝາຍວ່າດ້ວຍກະສິກຳ ມີໜ້າທີ່ກຳນົດຫລັກການ, ລະບຽບການ, ມາດຕະການຕ່າງໆ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ການຜະລິດກະສິກຳ ຊຶ່ງເປັນພື້ນຖານເສດຖະກິດຂອງປະເທດຊາດ ລວມທັງການຄຸ້ມຄອງ, ການປົກປັກຮັກສາກິດຈະການ ແລະ ຜະລິດຕະຜົນກະສິກຳ ແນໃສ່ຊຸກຍູ້, ສົ່ງເສີມ ແລະ ຂະຫຍາຍການຜະລິດກະສິກຳ ເພື່ອຮັບປະກັນການສະໜອງສະບຽງອາຫານ ແລະ ການຜະລິດເປັນສິນຄ້າ, ສ້າງເງື່ອນໄຂໃຫ້ແກ່ການກໍ່ສ້າງ ແລະ ຂະຫຍາຍອຸດສາຫະກຳປຸງແຕ່ງກະສິກຳ, ເຮັດໃຫ້ເສດຖະກິດແຫ່ງຊາດມີການຂະຫຍາຍຕົວ, ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ ທັງຮັບປະກັນບໍ່ໃຫ້ ກໍ່ຄວາມເສັຽຫາຍ ແລະ ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.

**ມາດຕາ 2. ກະສິກຳ**

ກະສິກຳແມ່ນການປູກຝັງ, ການລ້ຽງສັດ ແລະ ການປະມົງ ເພື່ອຕອບສະໜອງທາງດ້ານທັນຍາຫານ ແລະ ອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

**ມາດຕາ 3. ການສົ່ງເສີມການຜະລິດກະສິກຳ**

ລັດຊຸກຍູ້, ສົ່ງເສີມປະຊາຊົນບັນດາເຜົ່າ ແລະ ທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດໃຫ້ລົງທຶນໃສ່ການຜະລິດກະສິກຳຢ່າງກ້ວາງຂວາງ ແລະ ທັນສະໄໝເທື່ອລະກ້າວ ເພື່ອເປັນສະບຽງອາຫານ, ເປັນສິນຄ້າ, ເປັນວັດຖຸດິບ ສະໜອງໃຫ້ໂຮງງານອຸດສາຫະກຳປຸງແຕ່ງພາຍໃນປະເທດ ແລະ ເພື່ອສົ່ງອອກ.

### ມາດຕາ 4. ການປົກປ້ອງສິດຜົນປະໂຫຍດ ຂອງຜູ້ດຳເນີນກິດຈະການກະສິກຳ

ລັດປົກປ້ອງສິດຜົນປະໂຫຍດ ຂອງຜູ້ດຳເນີນກິດຈະການກະສິກຳ ດ້ວຍການວາງລະບຽບກົດໝາຍ, ຂໍ້ກຳນົດ ແລະ ລະບຽບການ ພ້ອມທັງນະໂຍບາຍຕ່າງໆ ເຊັ່ນ: ນະໂຍບາຍສິນເຊື່ອ, ນະໂຍບາຍຍົກເວັ້ນ ຫລື ຫລຸດຜ່ອນພາສີ, ອາກອນ, ຈຳກັດການນຳເຂົ້າສິນຄ້າກະສິກຳປະເພດຕ່າງໆ ທີ່ບໍ່ຈຳເປັນ ເພື່ອສົ່ງເສີມການຜະລິດກະສິກຳ ແລະ ຊຸກຍູ້ຕະຫລາດຈຳໜ່າຍພາຍໃນ ແລະ ຕ່າງປະເທດ.

### ມາດຕາ 5. ການປົກປັກຮັກສາທີ່ດິນກະສິກຳ

ບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການກະສິກຳ ບໍ່ມີສິດຖົມດິນກະສິກຳ ແລະ ຂຸດເອົາດິນກະສິກຳດ້ວຍຮູບການ ແລະ ວິທີການໃດກໍ່ຕາມທີ່ຈະເຮັດໃຫ້ທີ່ດິນກະສິກຳດັ່ງກ່າວປ່ຽນແປງຈາກສະພາບເດີມ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງກະສິກຳ ແລະ ປ່າໄມ້.

ການປົກປັກຮັກສາທີ່ດິນກະສິກຳ ຕ້ອງໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍ ທີ່ດິນ.

### ມາດຕາ 6. ການປົກປັກຮັກສາສິ່ງແວດລ້ອມ

ບຸກຄົນ ຫລື ການຈັດຕັ້ງ ທີ່ທຳການຜະລິດກະສິກຳ ລ້ວນແຕ່ມີພັນທະປົກປັກຮັກສາສິ່ງແວດລ້ອມ. ຜູ້ຜະລິດກະສິກຳ ຕ້ອງມີວິທີການ ແລະ ມາດຕະການອັນເໝາະສົມ ເພື່ອປົກປັກຮັກສາດິນ, ນ້ຳ, ປ່າໄມ້, ອາກາດ ແລະອື່ນໆ.

### ມາດຕາ 7. ການຮ່ວມມືສາກົນທາງດ້ານກະສິກຳ

ລັດສົ່ງເສີມ ການຮ່ວມມືກັບສາກົນ ທາງດ້ານກະສິກຳ ເພື່ອສ້າງເງື່ອນໄຂ ໃຫ້ກິດຈະການກະສິກຳມີການຂະຫຍາຍຕົວ ແລະ ທັນສະໄໝເທື່ອລະກ້າວ.

## ພາກທີ II ກິດຈະການກະສິກຳ

### ມາດຕາ 8. ກິດຈະການກະສິກຳ

ກິດຈະການກະສິກຳ ແມ່ນວຽກງານກ່ຽວກັບການປູກຝັງ, ການລ້ຽງສັດ ແລະ ການປະມົງ.

### ມາດຕາ 9. ປະເພດກິດຈະການກະສິກຳ

ກິດຈະການກະສິກຳ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ແບ່ງອອກເປັນປະເພດຕ່າງໆ ເຊັ່ນ: ກິດຈະການກ່ຽວກັບທີ່ດິນກະສິກຳ, ຊົນລະປະທານ, ແນວພັນພືດ ແລະ ແນວພັນສັດ, ຝຸ່ນ ແລະ ອາຫານສັດ, ຢາປາບສັດຕູພືດ ແລະ ຢາປົວສັດ, ເຄື່ອງມື ແລະ ພາຫະນະກົນຈັກການກະເສດ, ສາງເກັບມ້ຽນ, ການປຸງແຕ່ງຜົນຜະລິດກະສິກຳ, ຕະຫລາດກະສິກຳ, ການພົວພັນຮ່ວມມືກັບຕ່າງປະເທດທາງດ້ານກະສິກຳ.

**ມາດຕາ 10. ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການກະສິກຳ**

ຜູ້ດຳເນີນກິດຈະການກະສິກຳມີສິດດັ່ງຕໍ່ໄປນີ້:

-ໄດ້ຮັບການປົກປ້ອງຕາມກົດໝາຍ;

- ເປັນເຈົ້າກຳມະສິດຕໍ່ຊັບສິນ ແລະ ຜົນທີ່ໄດ້ຮັບຈາກການດຳເນີນກິດຈະການກະສິກຳ;

- ໄດ້ຮັບການຊ່ວຍເຫລືອ ແລະ ແນະນຳທາງດ້ານວິຊາການ ແລະ ເຕັກໂນໂລຊີຈາກຂະແໜງກະສິກຳ ແລະ ປ່າໄມ້;

- ໂອນ ແລະ ສືບທອດກິດຈະການກະສິກຳ.

ຜູ້ດຳເນີນກິດຈະການກະສິກຳມີພັນທະດັ່ງຕໍ່ໄປນີ້:

- ນຳໃຊ້ທີ່ດິນກະສິກຳໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ຕາມລະບຽບກົດໝາຍ;

- ບໍ່ສ້າງຄວາມເສັຽຫາຍແກ່ການຜະລິດຂອງຜູ້ອື່ນ ຫລື ແກ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

- ລາຍງານການແຜ່ລະບາດພະຍຸສັດ;

- ປະຕິບັດສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ;

- ປະຕິບັດມາດຕະການຄວາມປອດໄພທາງດ້ານວິຊາການ;

- ປະຕິບັດພັນທະພາສີອາກອນ ແລະ ພັນທະອື່ນໆ ກ່ຽວກັບກິດຈະການກະສິກຳ;

- ລາຍງານຜົນການດຳເນີນກິດຈະການກະສິກຳຕາມສັນຍາ;

- ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາກິດຈະການກະສິກຳ.

## ໝວດທີ 1 ທີ່ດິນກະສິກຳ

**ມາດຕາ 11. ການນຳໃຊ້ທີ່ດິນກະສິກຳ**

ລັດຈັດສັນ ແລະ ສົ່ງເສີມໃຫ້ນຳໃຊ້ທີ່ດິນກະສິກຳ ເຂົ້າໃນການຜະລິດ ຢ່າງຖືກຕ້ອງຕາມເປົ້າໝາຍ, ຕາມທ່າແຮງຂອງແຕ່ລະເຂດ ເພື່ອໃຫ້ແຕ່ລະຄອບຄົວ ມີທີ່ດິນທຳການຜະລິດ ຕາມຄວາມສາມາດດ້ານແຮງງານ ແລະ ທຶນຮອນຂອງຕົນ ດ້ວຍຮູບການມອບສິດນຳໃຊ້ ຫລື ໃຫ້ເຊົ່າຕາມລະບຽບກົດໝາຍ ໂດຍຖືເອົາການຍົກສະມັດຖະພາບຂອງດິນເປັນຕົ້ນຕໍ ແລະ ຫັນໄປສູ່ການເຮັດກະເສດສຸມເທື່ອລະກ້າວ.

ລັດເອົາໃຈໃສ່ຈັດສັນທີ່ດິນໃຫ້ປະຊາຊົນບັນດາເຜົ່າ ເພື່ອທຳການຜະລິດແບບຄົງທີ່ແນໃສ່ຫລຸດຜ່ອນການ ຖາງປ່າເຮັດໄຮ່ເທື່ອລະກ້າວ ແລະ ກ້າວໄປເຖິງການຢຸດຕິການຖາງປ່າເຮັດໄຮ່ຢ່າງສິ້ນເຊີງ.

**ມາດຕາ 12. ປະເພດທີ່ດິນກະສິກຳ.**

ທີ່ດິນກະສິກຳ ແບ່ງອອກເປັນ ສອງ ປະເພດ :

- ທີ່ດິນປູກຝັງ;

- ທີ່ດິນລ້ຽງສັດ.

ທີ່ດິນປູກຝັງ ແມ່ນທີ່ດິນທີ່ນຳໃຊ້ເຂົ້າໃນການປູກຝັງ ຊຶ່ງລວມມີ:

- ທີ່ດິນທີ່ມີຄວາມຮາບພຽງ;
- ທີ່ດິນເນີນ ຫລື ທີ່ດິນໂນນ.

ທີ່ດິນລ້ຽງສັດ ແມ່ນປະເພດທີ່ດິນປອກໂລ້ນ ຫລື ປ່າຫຍ້າປະເພດຕ່າງໆ ຊຶ່ງສາມາດຫັນມາປູກພືດ ແລະປູກຫຍ້າ ສຳລັບລ້ຽງສັດ ຫລື ດິນທີ່ສາມາດເຮັດຫນອງ ເພື່ອລ້ຽງສັດນ້ຳ.

### ມາດຕາ 13. ການຫັນປ່ຽນທີ່ດິນກະສິກຳ.

ການຫັນປ່ຽນທີ່ດິນກະສິກຳປະເພດໜຶ່ງໄປສູ່ທີ່ດິນກະສິກຳອີກປະເພດໜຶ່ງຈະຕ້ອງໄດ້ຮັບອະນຸຍາດ ຈາກຂະແຫນງການກະສິກຳ ແລະ ປ່າໄມ້ຕາມຂະຫນາດເນື້ອທີ່ດິນທີ່ ຈະຫັນ.

### ມາດຕາ 14. ການປັບປຸງ ທີ່ດິນກະສິກຳ.

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ທຳການຜະລິດກະສິກຳ ຕ້ອງເອົາໃຈໃສ່ປັບປຸງດິນ ໃຫ້ມີຄວາມອຸດົມສົມບູນ, ສາມາດນຳໃຊ້ ໄດ້ຢ່າງຍາວນານ ແລະ ມີປະສິດທິຜົນ ໃນການປູກຝັງ ແລະ ລ້ຽງສັດ ດ້ວຍການນຳໃຊ້ຝຸ່ນຕ່າງໆເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນຂຽວ, ຂີ້ເຈັ່ຽ, ປູນ, ຖ່ານຕົມ, ຫີນກາວ.

### ມາດຕາ 15. ເງື່ອນໄຂການນຳໃຊ້ທີ່ດິນກະສິກຳ.

ບຸກຄົນ ແລະ ການຈັດຕັ້ງທີ່ມີຈຸດປະສົງຢາກນຳໃຊ້ທີ່ດິນ ເພື່ອທຳການຜະລິດກະສິກຳນັ້ນຕ້ອງໄດ້ຮັບອະນຸຍາດຈາກລັດເສັຽກ່ອນ ຕາມທີ່ໄດ້ກຳນົດໄວ້ໃນວັກທີສອງ, ມາດຕາ 7 ຂອງກົດຫມາຍວ່າດ້ວຍທີ່ດິນ.

ບຸກຄົນ ແລະການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ທີ່ດິນກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນວັກທີ່ຫນຶ່ງເທິງນີ້ ຕ້ອງນຳໃຊ້ເຂົ້າໃນການຜະລິດກະສິກຳ ຢ່າງຖືກຕ້ອງຕາມເປົ້າຫມາຍ, ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດຫມາຍ.

ຖ້າວ່າຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ທີ່ດິນກະສິກຳຫາກບໍ່ປະຕິບັດຕາມເງື່ອນໄຂ ທີ່ໄດ້ກ່າວມາເທິງ ນີ້ພາຍໃນກຳນົດສາມປີແລ້ວ ກໍຈະຫມົດສິດໃນການນຳໃຊ້ທີ່ດິນດັ່ງກ່າວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດຫມາຍວ່າດ້ວຍທີ່ດິນ.

## ຫມວດທີ 2 ຊົນລະປະທານ

### ມາດຕາ 16. ຊົນລະປະທານ.

ຊົນລະປະທານແມ່ນການສະໜອງນ້ຳໃຫ້ແກ່ການຜະລິດກະສິກຳ ດ້ວຍວິທີການຕ່າງໆເຊັ່ນ: ການສ້າງອ່າງເກັບນ້ຳ, ການເຮັດຝາຍນ້ຳລົ້ນ, ການເຮັດປະຕູນ້ຳ, ການສູບນ້ຳ ແລະ ການສ້າງຄອງເໝືອງ.

## ມາດຕາ 17. ການນຳໃຊ້ຊົນລະປະທານ.

ຍ້ອນການຜະລິດກະສິກຳ ຂອງປະເທດເຮົາຍັງຂຶ້ນກັບທຳມະຊາດ ແລະ ຍັງມີໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມຂົ່ມຂູ່ ເພື່ອເຮັດໃຫ້ການຜະລິດມີປະສິດທິຜົນ ແລະ ກ້າວຂຶ້ນສູ່ການຜະລິດເປັນສິນຄ້ານັ້ນ ມີຄວາມຈຳເປັນຕ້ອງໄດ້ກໍ່ສ້າງຊົນລະປະທານ ເພື່ອຮັບໃຊ້ການຜະລິດກະສິກຳ.

ການນຳໃຊ້ຊົນລະປະທານ ເຂົ້າໃນການຜະລິດກະສິກຳ ຕ້ອງໃຫ້ຖືກຕາມກົດໝາຍວ່າດ້ວຍນ້ຳ ແລະ ຊັບ ພະຍາກອນແຫລ່ງນ້ຳ.

## ມາດຕາ 18. ການກໍ່ສ້າງ ແລະ ການຄຸ້ມຄອງຊົນລະປະທານ.

ກິດຈະການຊົນລະປະທານປະກອບດ້ວຍ ສາມຂະໜາດ:

- ຊົນລະປະທານຂະໜາດນ້ອຍ;
- ຊົນລະປະທານຂະໜາດກາງ;
- ຊົນລະປະທານຂະໜາດໃຫຍ່.

ຊົນລະປະທານຂະໜາດນ້ອຍ ແມ່ນຊົນລະປະທານ ຊຶ່ງກວມເນື້ອທີ່ການຜະລິດຕ່ຳກວ່າໜຶ່ງຮ້ອຍເຮັກຕາ;

ຊົນລະປະທານຂະໜາດກາງ ແມ່ນຊົນລະປະທານຊຶ່ງກວມເນື້ອທີ່ການຜະລິດແຕ່ ໜຶ່ງຮ້ອຍ ຫາ ຫ້າຮ້ອຍເຮັກຕາ;

ຊົນລະປະທານຂະໜາດໃຫຍ່ ແມ່ນຊົນລະປະທານຊຶ່ງກວມເນື້ອທີ່ການຜະລິດສູງກ່ວາຫ້າຮ້ອຍເຮັກຕາ ຂຶ້ນໄປ.

ຊົນລະປະທານຂະໜາດນ້ອຍ ແມ່ນຄອບຄົວ, ກຸ່ມ ຫລື ສະມາຄົມຜູ້ນຳໃຊ້ນ້ຳເປັນຜູ້ລົງທຶນກໍ່ສ້າງ, ຄຸ້ມຄອງ ແລະ ນຳໃຊ້. ໃນກໍລະນີທີ່ຈຳເປັນລັດກໍຈະຊຸກຍູ້, ປະກອບສ່ວນໃນການກໍ່ສ້າງຊົນລະປະທານຂະໜາດນ້ອຍ.

ຊົນລະປະທານຂະໜາດກາງແມ່ນລວມໝູ່ ຫລື ສະມາຄົມຜູ້ນຳໃຊ້ນ້ຳເປັນຜູ້ລົງທຶນກໍ່ສ້າງ, ຄຸ້ມ ຄອງ ແລະ ນ້ຳໃຊ້ເອງ. ສຳລັບຊົນລະປະທານຂະໜາດກາງ ທີ່ມີເຕັກນິກ ສັບສົນ ແລະ ຮຽກຮ້ອງທຶນຮອນສູງນັ້ນ ແມ່ນລັດກັບປະຊາຊົນ ຮ່ວມທຶນກັນ ກໍ່ສ້າງແລ້ວມອບກຳມະສິດໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້ເອງ.

ຊົນລະປະທານຂະໜາດໃຫຍ່ ແມ່ນລັດກັບປະຊາຊົນຮ່ວມທຶນກັນກໍ່ສ້າງ. ໃນກໍລະນີທີ່ການຄຸ້ມຄອງຊົນລະປະທານດັ່ງກ່າວຫາກບໍ່ມີເຕັກນິກສັບສົນນັ້ນ ແມ່ນມອບກຳມະສິດໃຫ້ປະຊາຊົນຄຸ້ມຄອງ. ຖ້າວ່າການຄຸ້ມຄອງຊົນລະປະທານດັ່ງກ່າວນັ້ນ ຫາກມີເຕັກນິກສັບສົນລັດຈະເຂົ້າຮ່ວມ ໃນການຄຸ້ມຄອງຊົນລະປະທານດັ່ງກ່າວ.

## ມາດຕາ 19. ອ່າງເກັບນ້ຳ

ອ່າງເກັບນ້ຳ ແມ່ນລະບົບເກັບກັກນ້ຳດ້ວຍການຂຸດສະ, ການຕັນນ້ຳຫ້ວຍ, ນ້ຳເຊ ເພື່ອໃຫ້ມີນ້ຳພຽງພໍ ແລະ ແຮໄວ້ ແນໃສ່ຮັບປະກັນການຜະລິດກະສິກຳ, ການໃຊ້ສອຍໃນຄອບຄົວ, ການຄົງຕົວຂອງສິ່ງແວດລ້ອມທຳມະຊາດແລະ ສັງຄົມ.

### ມາດຕາ 20. ຝາຍນ້ຳລົ້ນ

ຝາຍນ້ຳລົ້ນ ແມ່ນການຕັນສາຍນ້ຳເຊັ່ນ: ນ້ຳຫ້ວຍ, ນ້ຳເຊ ເພື່ອຍົກລະດັບນ້ຳ ໃຫ້ສູງຂຶ້ນ ແລ້ວນຳເອົານ້ຳເຂົ້າສູ່ເນື້ອທີ່ການຜະລິດກະສິກຳ.

### ມາດຕາ 21. ການສູບນ້ຳ

ການສູບນ້ຳ ແມ່ນການນຳເອົານ້ຳ ຈາກໜ້າດິນ ຫຼືໃຕ້ດິນ ເພື່ອມາຮັບໃຊ້ການຜະລິດກະສິກຳດ້ວຍອຸປະກອນປະຖົມປະຖານ ຫລື ອຸປະກອນທັນສະໄຫມເຊັ່ນ: ຈັກສູບນ້ຳ, ກົງພັດ.

### ມາດຕາ 22. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມທຳມະຊາດ

ຜູ້ຄອບຄອງທີ່ດິນຕອນລຸ່ມ ຕ້ອງຍອມຮັບການໄຫລເປັນປົກກະຕິຂອງນ້ຳຕາມທຳມະຊາດ ຈາກທີ່ດິນຕອນເທິງລົງສູ່ ຫລື ຜ່ານທີ່ດິນຂອງຕົນ.

ໃນກໍລະນີທີ່ຜູ້ຄອບຄອງທີ່ດິນຕອນລຸ່ມຫາກໄດ້ກັກຕັນນ້ຳຊຶ່ງໄດ້ກໍ່ຄວາມເສັຽຫາຍໃຫ້ແກ່ຜູ້ຄອບຄອງທີ່ດິນຕອນເທິງແລ້ວ ຜູ້ຄອບຄອງທີ່ດິນຕອນລຸ່ມດັ່ງກ່າວນັ້ນ ກໍຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍທີ່ເກີດຂຶ້ນ.

ຜູ້ຄອບຄອງທີ່ດິນຕອນເທິງບໍ່ມີສິດກີດກັ້ນການໄຫຼເປັນປົກກະຕິຂອງນ້ຳຕາມທຳມະຊາດ ລົງສູ່ທີ່ດິນຕອນ ລຸ່ມ ຊຶ່ງຈະສ້າງຄວາມເສຍຫາຍໃຫ້ແກ່ຜູ້ຊົມໃຊ້ນ້ຳຢູ່ໃນທີ່ດິນຕອນລຸ່ມນັ້ນ.

ໃນກໍລະນີທີ່ມີການກີດກັ້ນ ຊຶ່ງໄດ້ກໍ່ຄວາມເສັຽຫາຍແກ່ຜູ້ຊົມໃຊ້ນ້ຳຢູ່ທີ່ດິນຕອນລຸ່ມແລ້ວຜູ້ຄອບຄອງທີ່ດິນຕອນເທິງຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍຕາມກົດຫມາຍ.

### ມາດຕາ 23. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມກົດຫມາຍ

ບຸກຄົນ ຫລື ການຈັດຕັ້ງ ທີ່ມີທີ່ດິນກະສິກຳຢູ່ທາງກາງ ຫລື ຢູ່ລື້ນທີ່ດິນຂອງຜູ້ອື່ນ ຫາກບໍ່ມີເສັ້ນທາງອອກ, ບໍ່ມີຄອງນ້ຳຊົນລະປະທານ ຫລື ໄຟຟ້າຜ່ານເຂົ້າໄປຮັບໃຊ້ການຜະລິດຂອງຕົນນັ້ນ ມີສິດຮ້ອງຂໍສ້າງເສັ້ນທາງ, ຄອງ ຊົນລະປະທານ ຫລື ສາຍເບັ່ງໄຟຟ້າ ຜ່ານທີ່ດິນຂອງຜູ້ອື່ນ ທີ່ຢູ່ອ້ອມຂ້າງ ຕາມຄວາມເຫມາະສົມ ແລະຜູ້ຖືກຮ້ອງ ຂໍນັ້ນ ຕ້ອງອະນຸຍາດໃຫ້ຜ່ານ ຕາມການຮ້ອງຂໍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດຫມາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ, ມາດຕາ 61 ຂອງກົດຫມາຍວ່າດ້ວຍທີ່ດິນ ແລະມາດຕາ 28 ຂອງກົດຫມາຍວ່າດ້ວຍໄຟຟ້າ.

ຖ້າການສ້າງເສັ້ນທາງ, ຄອງຊົນລະປະທານ ຫລື ເບັ່ງສາຍໄຟຟ້າຜ່ານທີ່ດິນຂອງບຸກຄົນອື່ນ ຫາກໄດ້ກໍ່ຄວາມເສັຽຫາຍໃຫ້ແກ່ບຸກຄົນ ທີ່ອະນຸຍາດໃຫ້ຜ່ານນັ້ນ ຜູ້ໄດ້ຮັບສິດ ໃນການຜ່ານ ເຂົ້າໄປຫາເນື້ອທີ່ດິນກະສິກຳຂອງຕົນ ຕ້ອງໃຊ້ແທນຄ່າເສັຽຫາຍ ຕາມກົດຫມາຍ.

ໃນກໍລະນີທີ່ຜູ້ໃຫ້ທາງຜ່ານຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍບໍ່ໃຫ້ຮຽກຮ້ອງຄ່າເສັຽຫາຍ ເວັ້ນເສັຽແຕ່ການໃຫ້ທາງຜ່ານນັ້ນ ຫາກໄດ້ກໍ່ຄວາມເສັຽຫາຍໃຫ້ແກ່ຜູ້ກ່ຽວຫຼາຍກວ່າຜົນປະໂຫຍດທີ່ໄດ້ຮັບ.

## ໝວດທີ 3 ແນວພັນພືດແລະແນວພັນສັດ

### ມາດຕາ 24. ແນວພັນພືດ

ແນວພັນພືດແມ່ນແນວພັນຂອງ ພືດລົ້ມລຸກ ຫລື ພືດຢືນຕົ້ນ ຊຶ່ງອາດຈະແມ່ນແນວພັນບໍລິສຸດ, ແນວພັນປະສົມຫລືແນວພັນພື້ນເມືອງ ທີ່ໄດ້ຜ່ານການປັບປຸງ, ພັດທະນາ, ຂະຫຍາຍ ຫລື ສ້າງ ເປັນແນວພັນໃຫມ່ທີ່ມີປະສິດທິພາບສູງ ຕາມຂະບວນການທາງດ້ານວິທະຍາສາດເຕັກນິກ ໂດຍໄດ້ຜ່ານການຮັບຮອງ ແລະອະນຸຍາດ ໃຫ້ນໍາໃຊ້ເຂົ້າໃນການຜະລິດ ຈາກກະຊວງກະສິກໍາ ແລະປ່າໄມ້.

### ມາດຕາ 25. ແນວພັນສັດ

ແນວພັນສັດ ແມ່ນແນວພັນຂອງສັດປະເພດຕ່າງໆ ຊຶ່ງປະກອບດ້ວຍແນວພັນບໍລິສຸດ, ແນວພັນປະສົມ ແລະ ແນວພັນພື້ນເມືອງ ລວມທັງສັດບົກ ແລະ ສັດນໍ້າ ທີ່ມີການຈະເລີນເຕີບໃຫຍ່ໄວ, ສາມາດຕອບສະໜອງຜົນຜະລິດໄດ້ຫລາຍ, ມີຄຸນນະພາບດີ ແລະ ແມ່ນສາຍພັນ ທີ່ໄດ້ຜ່ານການຄັດເລືອກ, ປັບປຸງ, ຂະຫຍາຍ ຫລືສ້າງເປັນແນວພັນໃຫມ່ ຕາມຂະບວນການທາງດ້ານວິທະຍາສາດເຕັກນິກ ທີ່ໄດ້ຜ່ານການຮັບຮອງ ແລະອະນຸຍາດໃຫ້ນໍາໃຊ້ເຂົ້າໃນການຜະລິດຈາກກະຊວງກະສິກໍາ ແລະປ່າໄມ້.

### ມາດຕາ 26. ການນໍາໃຊ້ແນວພັນ

ລັດຊຸກຍູ້ໃຫ້ປະຊາຊົນ ຜະລິດ ແລະນໍາໃຊ້ ແນວພັນພືດ ແລະແນວພັນສັດ ທີ່ມີຄຸນນະພາບດີ ແລະ ເຫມາະສົມ ກັບຈຸດພິເສດແຕ່ລະທ້ອງຖິ່ນ ຂອງປະເທດ ເພື່ອໃຫ້ການຜະລິດມີປະສິດທິຜົນສູງ.

ການນໍາແນວພັນພືດ ຫລືແນວພັນສັດເຂົ້າມາພາຍໃນປະເທດ ຫລືສົ່ງອອກຕ່າງປະເທດຕ້ອງໄດ້ຮັບອະນຸຍາດຈາກຂະແໜງກະສິກໍາ ແລະປ່າໄມ້.

## ໝວດທີ 4 ຝຸ່ນ ແລະອາຫານສັດ

### ມາດຕາ 27. ຝຸ່ນ

ຝຸ່ນ ແມ່ນວັດສະດຸ ຊຶ່ງມີສ່ວນປະສົມຂອງທາດອິນຊີ ແລະທາດເຄມີຕ່າງ ໆ ທີ່ເປັນທາດອາຫານຈໍາເປັນສໍາລັບພືດ ເພື່ອຊ່ວຍໃຫ້ພືດໃຫຍ່ໄວ ແລະ ມີຄຸນນະພາບດີ ລວມທັງປັບປຸງດິນປູກຝັງໃຫ້ອຸດົມສົມບູນ.

### ມາດຕາ 28. ປະເພດຝຸ່ນ

ຝຸ່ນທີ່ນໍາໃຊ້ເຂົ້າໃນການຜະລິດກະສິກໍາ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີ ສອງປະເພດຄື: ຝຸ່ນວິທະຍາສາດ ແລະ ຝຸ່ນອິງຄະທາດ.

ຝຸ່ນວິທະຍາສາດ ແມ່ນຝຸ່ນທີ່ປະກອບດ້ວຍສານເຄມີປະເພດດຽວ ຫລື ປະເພດປະສົມ ຊຶ່ງເປັນອາຫານໂດຍກົງຂອງພືດເຊັ່ນ: ຝຸ່ນອາສິດ, ຝຸ່ນຟົດສະຟໍ, ຝຸ່ນໂປຕັດຊຽມ ແລະ ອື່ນໆ.

ຝຸ່ນອິງຄະທາດແມ່ນຝຸ່ນທີ່ປະກອບດ້ວຍການສະສົມທາດຕ່າງໆ ຈາກການສະຫຼາຍຕົວຂອງ ເສດເຫຼືອຊາກພືດ, ຊາກສັດ ແລະໂລຫະທາດຫລາຍຊະນິດ ຊຶ່ງເປັນອາຫານທາງອ້ອມຂອງພືດລວມ ທັງຊ່ວຍປັບປຸງຄຸນນະພາບຂອງດິນ ເຊັ່ນ: ຝຸ່ນບົ່ມ, ຝຸ່ນມູນສັດ ແລະ ອື່ນໆ.

## ມາດຕາ 29. ການນຳໃຊ້ຝຸ່ນ

ການນຳໃຊ້ຝຸ່ນທຸກຊະນິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມ ລະບຽບການນຳໃຊ້ຝຸ່ນ ຢ່າງເຄັ່ງ ຄັດເຊັ່ນ: ນຳໃຊ້ໃຫ້ຖືກຕາມຈຸດປະສົງ, ປະເພດ ແລະປະລິມານ ເພື່ອເຮັດໃຫ້ການນຳໃຊ້ຝຸ່ນ ມີ ປະສິດທິພາບ, ຮັບປະກັນບໍ່ໃຫ້ ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບຂອງຄົນ ແລະ ສັດ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ວາງລະບຽບກ່ຽວກັບການນຳໃຊ້ຝຸ່ນ ແລະ ກຳນົດປະ ເພດຂອງຝຸ່ນທີ່ເປັນອັນຕະລາຍຮ້າຍແຮງທີ່ຫ້າມນຳໃຊ້. ພ້ອມກັນນີ້ ກໍຕ້ອງຊ່ວຍເຫລືອຝຶກອົບຮົມ, ຊຸກຍູ້ ໃຫ້ຊາວກະສິກອນ ໄດ້ນຳ ໃຊ້ຝຸ່ນອິງຄະທາດເປັນຕົ້ນຕໍ ແລະ ນຳໃຊ້ຝຸ່ນໃຫ້ຖືກຕ້ອງຕາມວິທີ ການ, ມາດຕະຖານເຕັກນິກ ແລະ ທັນກັບລະດູການຜະລິດ.

## ມາດຕາ 30. ອາຫານສັດ

ອາຫານສັດແມ່ນວັດສະດຸ ທີ່ນຳມາລ້ຽງສັດ ຊຶ່ງໄດ້ມາຈາກທຳມະຊາດ, ການຜະລິດ ຫລື ການປຸງແຕ່ງຈາກຜະລິດຕະຜົນກະສິກຳ ແລະ ທາດອື່ນໆ ທີ່ມີຄຸນນະພາບທາງດ້ານໂພຊະນາການ.

ອາຫານສັດປະກອບດ້ວຍ ສາມປະເພດຄື:

- ອາຫານສົດເຊັ່ນ: ຫຍ້າຂຽວ, ເມັດພືດ;
- ອາຫານປຸງແຕ່ງເບື້ອງຕົ້ນເຊັ່ນ: ຮຳ, ເຟືອງ, ຫຍ້າບົ່ມ, ຫຍ້າແຫ້ງ;
- ອາຫານສຳເລັດຮູບເຊັ່ນ: ອາຫານປຸງແຕ່ງຂຶ້ນຕາມສູດໂພຊະນາການ ສຳລັບແຕ່ລະປະ ເພດສັດ

## ມາດຕາ 31. ການຄຸ້ມຄອງຝຸ່ນ ແລະ ອາຫານສັດ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງຝຸ່ນວິທະຍາ ສາດ, ຝຸ່ນອິງຄະທາດ ແລະ ອາຫານສັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຂະແໜງອຸດສາຫະກຳ ແລະ ຫັດຖະກຳ, ການຄ້າ, ການເງິນ, ທະນາຄານ, ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເພື່ອກຳນົດປະເພດ, ຄຸນນະພາບຂອງຝຸ່ນ, ຄຸ້ມຄອງການນຳເຂົ້າ, ການຂົນສົ່ງ, ການຈຳໜ່າຍ, ການເກັບຮັກສາ, ການຫຸ້ມຫໍ່ ແລະ ກິດຈະການອື່ນໆ ທີ່ກ່ຽວພັນກັບຝຸ່ນ ເພື່ອຮັບປະກັນໃຫ້ຝຸ່ນທຸກຊະນິດ ມີສ່ວນປະສົມຖືກຕ້ອງຕາມສູດ, ມີຄຸນນະພາບດີ ພ້ອມທັງຊຸກຍູ້ ໃຫ້ ມີການຜະລິດຝຸ່ນ ແລະອາຫານສັດຢູ່ພາຍໃນປະເທດ.

## ໝວດທີ 5 ຢາປາບສັດຕູພືດ ແລະ ຢາປົວສັດ

**ມາດຕາ 32. ຢາປາບສັດຕູພືດ**

ຢາປາບສັດຕູພືດ ແມ່ນສານທີ່ມີປະຕິກິລິຍາທາງເຄມີ ເພື່ອນຳໃຊ້ເຂົ້າໃນການປ້ອງກັນ, ກຳຈັດສັດຕູພືດ ທີ່ກໍ່ໃຫ້ເກີດຄວາມເສັຽຫາຍແກ່ການປູກຝັງ ລວມທັງສານເຄມີທີ່ນຳໃຊ້ໃນການເກັບມ້ຽນ , ຮັກສາ ແລະ ການຂົນສົ່ງ.

ຢາປາບສັດຕູພືດໄດ້ມາຈາກການປະສົມທາດເຄມີຕ່າງໆ ຊຶ່ງປຸງແຕ່ງຈາກໂຮງງານ ຫລື ສະກັດຈາກພືດໂດຍກົງ ຊຶ່ງເອີ້ນວ່າຢາປາບສັດຕູພືດພື້ນເມືອງ.

**ມາດຕາ33. ຢາປົວສັດ**

ຢາປົວສັດ ແມ່ນສານທີ່ມີປະຕິກິລິຍາທາງເຄມີ, ປະກອບດ້ວຍສ່ວນປະສົມຂອງທາດເຄມີ ຫລື ສະກັດໂດຍກົງຈາກພືດ ຫລືສັດ ຊຶ່ງມີຄຸນລັກສະນະເປັນຢາ ເພື່ອນຳໃຊ້ເຂົ້າໃນການປ້ອງກັນ ແລະ ປົວພະຍາດຂອງສັດລ້ຽງທຸກຊະນິດ.

**ມາດຕາ 34. ການນຳໃຊ້ຢາປາບສັດຕູພືດ ແລະ ຢາປົວສັດ**

ຜູ້ທີ່ນຳໃຊ້ຢາປາບສັດຕູພືດ ຫລືຢາປົວສັດ ຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມຈຸດປະສົງ ແລະ ລະບຽບການນຳໃຊ້ຢ່າງເຄັ່ງຄັດ ລວມທັງການເກັບມ້ຽນຮັກສາ ຢາດັ່ງກ່າວ ເພື່ອເຮັດໃຫ້ການນຳໃຊ້ຢາປາບສັດຕູພືດ ຫລື ຢາປົວສັດ ມີປະສິດທິພາບ ທັງຮັບປະກັນບໍ່ໃຫ້ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບຂອງຄົນ ແລະ ສັດ.

**ມາດຕາ 35. ການຄຸ້ມຄອງຢາປາບສັດຕູພືດ ແລະ ຢາປົວສັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການກ່ຽວກັບການຄຸ້ມຄອງຢາປາບສັດຕູພືດ ແລະ ຢາປົວສັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ກະຊວງການຄ້າ, ກະຊວງການເງິນ ເພື່ອກຳນົດປະເພດ, ຄຸນນະພາບຂອງຢາທີ່ເປັນອັນຕະລາຍ ແລະປະເພດຫ້າມນຳໃຊ້, ຄຸ້ມຄອງການນຳເຂົ້າ, ການຂົນສົ່ງ, ການຈຳໜ່າຍ, ການເກັບຮັກສາ ແລະ ກິດຈະການອື່ນໆ ທີ່ກ່ຽວຂ້ອງກັບຢາປາບສັດຕູພືດ ຫລື ຢາປົວສັດ ເພື່ອຮັບປະກັນໃຫ້ປະເພດຢາຕ່າງໆ ດັ່ງກ່າວມີສ່ວນປະສົມຖືກຕ້ອງຕາມສູດ, ຕາມມາດຕະຖານເຕັກນິກ ແລະ ມີຄຸນນະພາບດີ.

ຢາປາບສັດຕູພືດ ແລະ ຢາປົວສັດທຸກປະເພດ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ ແລະ ຈຳໜ່າຍນັ້ນ ຕ້ອງຕິດສະຫລາກຢ່າງຈະແຈ້ງ, ເຫັນໄດ້ງ່າຍ ແລະ ສາມາດເຂົ້າໃຈໄດ້ ຊຶ່ງຈະຕ້ອງບົ່ງບອກຄຸນລັກສະນະ, ຊະນິດສານເຄມີ, ວິທີ ແລະ ກຳນົດເວລາການນຳໃຊ້ ຢ່າງລະອຽດ, ຄວາມເປັນອັນຕະລາຍ ພ້ອມທັງແນະນຳວິທີແກ້ພິດໃນເບື້ອງຕົ້ນ.

## ໝວດທີ 6 ເຄື່ອງມື ແລະ ພາຫະນະກົນຈັກການກະເສດ

**ມາດຕາ36. ເຄື່ອງມືແລະພາຫະນະກົນຈັກການກະເສດ**

ເຄື່ອງມື ແລະພາຫະນະກົນຈັກການກະເສດ ແມ່ນເຄື່ອງມື ແລະພາຫະນະກົນຈັກທີ່ນໍາໃຊ້ເຂົ້າໃນການປູກ ຝັງ ແລະ ລ້ຽງສັດ ຊຶ່ງລວມມີ:

- ເຄື່ອງມື ແລະ ພາຫະນະກົນຈັກທີ່ຮັບໃຊ້ການບຸກເບີກເນື້ອທີ່ດິນປູກຝັງ ຫລື ລ້ຽງສັດ, ການດັດແປງໜ້າດິນ, ການໄຖ, ຄາດ, ປັກດໍາ,ເສັຽຫຍ້າ,ໃສ່ຝຸ່ນ,ປ້ອງກັນຫລືປາບສັດຕູພືດ,ເກັບກ່ຽວ, ຟາດ, ເກັບຮັກສາ, ສີ, ບົດ ແລະ ຂົນສົ່ງ ຊຶ່ງປະກອບດ້ວຍເຄື່ອງມືງ່າຍດາຍ, ປະຖົມປະຖານເຊັ່ນ: ຈົກ, ສຽມ, ຂວ້ານ, ກວຽນ ແລະ ພາຫະນະກົນຈັກທັນສະໄໝເຊັ່ນ : ລົດດຸດ, ລົດໄຖ, ຈັກຟາດເຂົ້າ;
- ເຄື່ອງມື ແລະ ພາຫະນະກົນຈັກປ້ອງກັນ, ຮັກສາ, ລ້ຽງ ແລະປິ່ນປົວສັດ;
- ເຄື່ອງມືຕົບແຕ່ງ, ຄັດເລືອກ ຜົນຜະລິດ ກະສິກໍາ, ແຊ່ເຢັນ ແລະ ອື່ນໆ.

**ມາດຕາ 37. ການຜະລິດເຄື່ອງມື ແລະ ພາຫະນະກົນຈັກການກະເສດ**

ກະຊວງອຸດສາຫະກໍາ ແລະ ຫັດຖະກໍາ ເປັນຜູ້ກໍານົດລະບຽບການ ແລະ ມາດຕະຖານເຕັກນິກ ໃນການນໍາເຂົ້າ ຫລື ຜະລິດບັນດາເຄື່ອງມື ແລະ ພາຫະນະກົນຈັກການກະເສດ ໂດຍ ປະສານສົມທົບກັບກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

## ໝວດທີ 7 ສາງເກັບມ້ຽນ

**ມາດຕາ 38. ສາງເກັບມ້ຽນ**

ສາງເກັບມ້ຽນແມ່ນອາຄານ, ສະຖານທີ່ ສໍາລັບເກັບມ້ຽນຜົນຜະລິດກະສິກໍາ, ຝຸ່ນ ແລະ ອາຫານສັດ, ຢາປາບສັດຕູພືດ ແລະຢາປົວສັດ, ຮັກສາຄຸນນະພາບໃຫ້ຍາວນານ ຊຶ່ງລວມມີ: ເລົ້າເຂົ້າ, ສາງເກັບມ້ຽນເມັດພືດ, ແນວພັນ, ຝຸ່ນ, ອາຫານສັດ, ສາງເຢັນສໍາລັບເກັບມ້ຽນຜັກ, ໝາກໄມ້, ຊີ້ນສົດ, ນົມສົດ ແລະສາງສະເພາະເພື່ອເກັບມ້ຽນ ຢາປາບສັດຕູພືດ ແລະຢາປົວສັດ.

**ມາດຕາ 39. ການສ້າງສາງເກັບມ້ຽນ**

ການສ້າງສາງເກັບມ້ຽນຕ້ອງຮັບປະກັນໃຫ້ຖືກຕ້ອງຕາມລະບຽບການ ແລະ ມາດຕະຖານເຕັກນິກ ທີ່ກະຊວງກະສິກໍາ ແລະ ປ່າໄມ້ວາງອອກ, ພ້ອມກັນນັ້ນ ກໍຕ້ອງໃຫ້ຖືກຕ້ອງຕາມ ລະບຽບຂອງຜັງເມືອງ.

## ໝວດທີ 8 ການປຸງແຕ່ງຜົນຜະລິດກະສິກຳ

**ມາດຕາ 40. ການປຸງແຕ່ງຜົນຜະລິດກະສິກຳ**

ການປຸງແຕ່ງຜົນຜະລິດກະສິກຳ ແມ່ນການນຳເອົາໝາກຜົນທີ່ໄດ້ມາຈາກ ການປູກຝັງ, ລ້ຽງສັດ ແລະ ການປະມົງ ມາປຸງແຕ່ງໃຫ້ເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບເຊັ່ນ: ການດອງ, ການຕາກແຫ້ງ, ການເຮັດອາຫານສຳເລັດຮູບ, ການເຮັດເຄື່ອງກະປ໋ອງ, ການສະກັດນ້ຳມັນພືດ, ການຜະລິດເປັນເຄື່ອງໃຊ້ສອຍ ແລະ ອື່ນ ໆ.

**ມາດຕາ 41. ການສ້າງໂຮງຫັດຖະກຳ ແລະໂຮງງານປຸງແຕ່ງຜົນຜະລິດກະສິກຳ**

ການສ້າງໂຮງຫັດຖະກຳ ແລະ ໂຮງງານປຸງແຕ່ງຜົນຜະລິດກະສິກຳ ຕ້ອງຮັບປະກັນໃຫ້ຖືກຕາມລະບຽບການ ແລະ ມາດຕະຖານເຕັກນິກ ທີ່ກະຊວງອຸດສາຫະກຳ ແລະ ຫັດຖະກຳ ແລະ ກະຊວງສາທາລະນະສຸກວາງອອກ, ພ້ອມກັນນັ້ນ ກໍໃຫ້ຖືກຕ້ອງຕາມລະບຽບຂອງຜັງເມືອງ.

## ໝວດທີ 9 ຕະຫລາດກະສິກຳ

**ມາດຕາ 42. ຕະຫລາດກະສິກຳ**

ຕະຫລາດກະສິກຳ ແມ່ນບ່ອນຊື້ຂາຍຜົນຜະລິດກະສິກຳ ລະຫວ່າງຜູ້ຜະລິດ ແລະ ຜູ້ຊົມໃຊ້ລວມທັງການ ນຳເອົາຜົນຜະລິດກະສິກຳອອກສູ່ຂອດຈໍລະຈອນທົ່ວໄປ. ຕະຫລາດກະສິກຳມີຄວາມສຳຄັນຕໍ່ການຊຸກຍູ້ ຂະບວນການຜະລິດກະສິກຳຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແນໃສ່ຕອບສະໜອງສະບຽງອາຫານ ຢ່າງ ພຽງພໍ ແລະ ເປັນສິນຄ້າສົ່ງອອກ.

**ມາດຕາ 43. ການສ້າງຕະຫລາດກະສິກຳ**

ຕະຫລາດກະສິກຳຕ້ອງສ້າງຂຶ້ນຢ່າງກ້ວາງຂວາງດ້ວຍ ຫລາຍຮູບການ, ຫລາຍລະດັບທັງຢູ່ພາຍໃນ ແລະຕ່າງປະເທດ ເພື່ອເປັນບ່ອນຈຳໜ່າຍ ຜົນຜະລິດກະສິກຳ, ສ້າງຕັ້ງສະຫະກອນ ແລະບໍລິສັດ ຜູກພັນຊື້- ຂາຍ ກັບຊາວກະສິກອນໂດຍກົງ, ສ້າງຕັ້ງບໍລິສັດສົ່ງອອກ ຜະລິດຕະພົນກະສິກຳ.

## ໝວດທີ 10 ການພົວພັນຮ່ວມມືກັບຕ່າງປະເທດທາງດ້ານກະສິກຳ

**ມາດຕາ 44. ການພົວພັນຮ່ວມມືກັບຕ່າງປະເທດ ທາງດ້ານເຕັກນິກ**

ລັດເປີດກວ້າງການຮ່ວມມືກັບສາກົນທາງດ້ານກະສິກຳ ເພື່ອແລກປ່ຽນບົດຮຽນ, ວິຊາການ, ການຄຸ້ມຄອງ, ນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອມາພັດທະນາກິດຈະການກະສິກຳຂອງປະເທດເຮົາໃຫ້ ມີການຂະຫຍາຍຕົວ ແລະ ມີປະສິດທິພາບສູງ.

**ມາດຕາ 45. ການພົວພັນຮ່ວມມືກັບຕ່າງປະເທດທາງດ້ານເສດຖະກິດ**

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຍາດແຍ່ງທຶນຮອນຈາກຕ່າງປະເທດ ເພື່ອມາເສີມຂະຫຍາຍການປູກຝັງ, ລ້ຽງສັດ ລວມທັງການດຶງດູດການລົງທຶນຂອງຕ່າງປະເທດເຂົ້າໃນກິດຈະການກະສິກຳ.

## ພາກທີ III ການລົງທຶນໃສ່ກິດຈະການກະສິກຳ

**ມາດຕາ 46. ການລົງທຶນໃສ່ກິດຈະການກະສິກຳ.**

ການລົງທຶນໃສ່ກິດຈະການການກະສິກຳ ແມ່ນການລົງທຶນໃສ່ການປູກຝັງ, ລ້ຽງສັດ ແລະ ການປະມົງ ເພື່ອທຳການຜະລິດ ຫລືດຳເນີນທຸລະກິດກ່ຽວກັບກະສິກຳ.

**ມາດຕາ 47. ຮູບການລົງທຶນ**

ຮູບການລົງທຶນໃສ່ການຜະລິດ ກະສິກຳປະກອບມີ :

- ການລົງທຶນ ຂອງຫົວໜ່ວຍຄອບຄົວ;
- ການລົງທຶນແບບຮ່ວມມືຂອງປະຊາຊົນ;
- ການລົງທຶນ ຂອງເອກະຊົນ;
- ການລົງທຶນຂອງລັດແຕ່ຝ່າຍດຽວ ໃນກໍລະນີທີ່ບໍ່ມີພາກສ່ວນເສດຖະກິດອື່ນມາລົງທຶນ ແຕ່ການລົງທຶນດັ່ງກ່າວ ພົດມີຄວາມສຳຄັນ ແລະ ຈຳເປັນສຳລັບຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ;
- ການລົງທຶນຂອງລັດ ກັບເອກະຊົນພາຍໃນປະເທດ ຫລື ຕ່າງປະເທດ;
- ການລົງທຶນ ຂອງເອກະຊົນພາຍໃນ ກັບຕ່າງປະເທດ;
- ການລົງທຶນ ຂອງຕ່າງປະເທດແຕ່ຝ່າຍດຽວ.

ການລົງທຶນ ໃສ່ການຜະລິດກະສິກຳ ແບ່ງອອກເປັນສາມ ຂະໜາດ:

- ການຜະລິດ ແລະ ທຸລະກິດ ກະສິກຳ ຂະໜາດນ້ອຍ;
- ການຜະລິດ ແລະ ທຸລະກິດ ກະສິກຳ ຂະໜາດກາງ;
- ທຸລະກິດ ກະສິກຳ ຂະໜາດໃຫ່ຍ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດຂະໜາດການຜະລິດ ແລະ ທຸລະກິດກະສິກຳ ໂດຍປະສານສົມທົບກັບຄະນະກຳມະການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ.

### ມາດຕາ 48. ຈຸດປະສົງ

ການສົ່ງເສີມການຜະລິດກະສິກຳ ມີຈຸດປະສົງ ແນໃສ່ໃຫ້ຜະລິດຕະຜົນກະສິກຳຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງສັງຄົມ, ມີສ່ວນແຮໄວ້ ແລະເພື່ອຂາຍເປັນສິນຄ້າ.

### ມາດຕາ 49. ເນື້ອໃນຂອງການສົ່ງເສີມການຜະລິດກະສິກຳ

ເພື່ອຮັບປະກັນໃຫ້ການຜະລິດກະສິກຳ ມີປະສິດທິຜົນສູງນັ້ນ ການສົ່ງເສີມການຜະລິດກະສິກຳຕ້ອງດຳເນີນຢ່າງຄົບຊຸດ ຊຶ່ງປະກອບດ້ວຍ :

- ທຶນ ແລະ ກອງທຶນສົ່ງເສີມ;
- ແນວພັນພືດ ແລະ ແນວພັນສັດ;
- ຝຸ່ນ ແລະ ອາຫານສັດ;
- ຢາປາບສັດຕູພືດ ແລະ ຢາປົວສັດ;
- ເຄື່ອງມື ແລະ ພາຫະນະກົນຈັກການກະເສດ;
- ຊົນລະປະທານ;
- ວິຊາການ;
- ຂໍ້ມູນຂ່າວສານທາງດ້ານກະສິກຳ;
- ສູນຄົ້ນຄວ້າ ແລະ ສະຖານີທົດລອງ;
- ການຝຶກອົບຮົມຊາວກະສິກອນ;
- ສາງ, ໂຮງອົບ ແລະ ຫ້ອງເຢັນ;
- ການປຸງແຕ່ງຜະລິດຕະຜົນກະສິກຳ;
- ທະນາຄານເມັດພືດ ແລະ ທະນາຄານສັດ;
- ການຕະຫລາດ;
- ລາຄາ;
- ການປົກປ້ອງຜົນປະໂຫຍດຂອງຊາວກະສິກອນ.

### ມາດຕາ 50. ທຶນ ແລະ ກອງທຶນສົ່ງເສີມ

ທຶນ ແລະ ກອງທຶນສົ່ງເສີມ ແມ່ນພາຫະນະທາງດ້ານການເງິນ ທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳ. ລັດຈະສົ່ງເສີມໃຫ້ປະຊາຊົນກູ້ຢືມທຶນ ມາທຳການຜະລິດກະສິກຳ ເປັນແຕ່ລະໄລຍະຄື: ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວດ້ວຍດອກເບັ້ຍທີ່ມີລັກສະນະສົ່ງເສີມ ພ້ອມທັງດຶງດູດການຊ່ວຍເຫລືອຂອງຕ່າງປະເທດ ເພື່ອມາຊຸກຍູ້ການຜະລິດກະສິກຳ.

ໃນກໍລະນີ ທີ່ເກີດໄພທຳມະຊາດເຊັ່ນ: ໄພແຫ້ງແລ້ງ, ໄພນ້ຳຖ້ວມ, ພະຍຸສັດ, ພະຍາດບົ້ງແມງ ຫລື ອື່ນໆ ທີ່ສ້າງຄວາມເສັຽຫາຍຢ່າງຮ້າຍແຮງ ໃຫ້ແກ່ການຜະລິດກະສິກຳນັ້ນ ລັດຈະມີນະໂຍ

ບາຍຜ່ອນຜັນການທົດແທນຕົ້ນທຶນ ແລະ ດອກເບັ້ຍທີ່ໄດ້ກູ້ຢືມຈາກລັດໃຫ້ແກ່ ຊາວກະສິກອນຢ່າງສົມເຫດສົມຜົນ.

ລັດສ້າງຕັ້ງກອງທຶນສົ່ງເສີມກະສິກຳ ເພື່ອຊຸກຍູ້ການຜະລິດກະສິກຳໃຫ້ມີປະສິດທິພາບ.

ກອງທຶນສົ່ງເສີມກະສິກຳໄດ້ມາຈາກ:

- ທຶນປະກອບຂອງລັດ;
- ທຶນປະກອບຂອງປະຊາຊົນ;
- ທຶນຊ່ວຍເຫລືອຈາກສາກົນ.

## ມາດຕາ 51. ແນວພັນພືດ ແລະ ແນວພັນສັດ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຄົ້ນຄ້ວາວິທະຍາສາດ ຊອກຫາແນວພັນພືດ, ແນວພັນສັດຢູ່ພາຍໃນ ແລະ ຈາກຕ່າງປະເທດ ທີ່ດີ ແລະ ເຫມາະສົມ ກັບສະພາບດິນຟ້າອາກາດຂອງແຕ່ລະທ້ອງຖິ່ນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອໃຫ້ການຜະລິດກະສິກຳ ມີປະສິດທິພາບສູງ ໂດຍປະສານສົມທົບກັບອົງການວິທະຍາສາດ, ເຕັກໂນໂລຊີ ແລະສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ ແລະ ອຳນາດການ ປົກຄອງທ້ອງຖິ່ນ.

## ມາດຕາ 52. ຝຸ່ນ ແລະ ອາຫານສັດ

ລັດສົ່ງເສີມການສະຫນອງຝຸ່ນແກ່ຊາວກະສິກອນຢ່າງກວ້າງຂວາງ ແລະ ທັນກັບລະດູການ ເພື່ອຮັບປະກັນໃຫ້ການຜະລິດ ກະສິກຳ ມີປະສິດທິຜົນສູງທາງດ້ານປະລິມານ ແລະ ຄຸນນະພາບ ໂດຍຊຸກຍູ້ໃຫ້ມີການຜະລິດຝຸ່ນອົງຄະທາດ ແລະ ຝຸ່ນວິທະຍາສາດ ຢູ່ພາຍໃນປະເທດ ແລະ ໃນກໍລະນີທີ່ຈຳເປັນກໍສາມາດນຳເຂົ້າຈາກຕ່າງປະເທດໄດ້ຕາມລະບຽບກົດຫມາຍ.

ລັດສົ່ງເສີມໃຫ້ມີການຕອບສະຫນອງດ້ານອາຫານສັດ ໃຫ້ແກ່ສັດລ້ຽງຂອງຄອບຄົວ ແລະ ສັດລ້ຽງເປັນທຸລະກິດ ດ້ວຍການຊຸກຍູ້ໃຫ້ຊອກຫາແນວພັນພືດທີ່ດີແກ່ການລ້ຽງສັດຈາກ ພາຍໃນ ແລະ ຕ່າງປະເທດ, ຜະລິດວັດຖຸດິບປ້ອນໂຮງງານອາຫານສັດ ລວມທັງການກໍ່ສ້າງໂຮງງານປຸງແຕ່ງອາຫານສັດ.

ໃນກໍລະນີທີ່ການຜະລິດອາຫານສັດ ຢູ່ພາຍໃນປະເທດຫາກບໍ່ພຽງພໍ ກໍອະນຸຍາດໃຫ້ນຳເຂົ້າຈາກຕ່າງປະເທດໄດ້ ຕາມລະບຽບກົດຫມາຍ.

## ມາດຕາ 53. ຢາປາບສັດຕູພືດ ແລະ ຢາປົວສັດ

ເພື່ອຕອບສະຫນອງຢາປາບສັດຕູພືດ ແລະ ຢາປົວສັດໃຫ້ພຽງພໍ ແລະ ທັນເວລານັ້ນ ລັດສົ່ງເສີມການຜະລິດ ຢາປາບສັດຕູພືດ ແລະ ຢາປົວສັດ ຢູ່ພາຍໃນປະເທດ ແລະ ອະນຸຍາດໃຫ້ນຳຢາດັ່ງກ່າວເຂົ້າມາຈາກຕ່າງປະເທດ ຕາມລະບຽບກົດຫມາຍໃນກໍລະນີທີ່ຈຳເປັນ.

## ມາດຕາ 54. ເຄື່ອງມື ແລະ ພາຫະນະກົນຈັກການກະເສດ

ເຄື່ອງມື ແລະ ພາຫະນະກົນຈັກການກະເສດ ແມ່ນພາຫະນະທີ່ຈຳເປັນ ແລະ ມີຄວາມສຳຄັນໃນການຍົກປະສິດທິພາບ ຂອງການຜະລິດກະສິກຳ. ລັດສົ່ງເສີມໃຫ້ທຳການຜະລິດ ເຄື່ອງມື ແລະ ພາຫະນະກົນຈັກການກະເສດທີ່ເຫມາະສົມ ແລະທັນສະໄໝ ຢູ່ພາຍໃນປະເທດ ແລະ ໃນກໍລະນີທີ່ຈຳເປັນ ກໍອະນຸຍາດ ໃຫ້ນຳເຂົ້າຈາກຕ່າງປະເທດຕາມລະບຽບກົດໝາຍ ໃຫ້ພຽງພໍ ແລະ ທັນເວລາ. ນອກຈາກນີ້ ລັດຍັງສົ່ງເສີມໃຫ້ມີການຈັດຕັ້ງກອງກົນຈັກການກະເສດໃນເຂດຕ່າງໆເປັນຕົ້ນ ໃນເຂດຈຸດສຸມກະສິກຳ.

## ມາດຕາ 55. ຊົນລະປະທານ

ເພື່ອໃຫ້ການຜະລິດ ກະສິກຳສາມາດດຳເນີນໄດ້ຫລາຍລະດູການ ແລະ ມີປະສິດທິພາບ ລັດສົ່ງເສີມໃຫ້ມີການພັດທະນາຊົນລະປະທານດ້ວຍຫລາຍລະດັບ, ຫລາຍຂະໜາດ, ຢ່າງກ້ວາງຂວາງເປັນຕົ້ນການຂຸດສະ, ການສ້າງອ່າງເກັບນ້ຳ, ການຜະລິດ ແລະ ການນຳເຂົ້າຈາກຕ່າງປະເທດ ຈັກສູບນ້ຳຢ່າງພຽງພໍ ຕາມລະບຽບກົດໝາຍ.

ອຳນາດການປົກຄອງ ມີໜ້າທີ່ຊຸກຍູ້, ປຸກລະດົມການ ສ້າງຊົນລະປະທານດ້ວຍທຶນຂອງບຸກຄົນ, ລວມໝູ່, ລັດຮ່ວມທຶນກັບປະຊາຊົນ ຫລືລັດເປັນຜູ້ລົງທຶນເອງ.

## ມາດຕາ 56. ວິຊາການ

ໃນການຜະລິດກະສິກຳຂອດວິຊາການແມ່ນມີລັກສະນະຕັດສິນ, ລັດມີໜ້າທີ່ກໍ່ສ້າງນັກວິຊາການດ້ານກະສິກຳຫລາຍລະດັບ ເພື່ອຕອບສະໜອງຄວາມຕ້ອງການທີ່ຈຳເປັນ ເພື່ອຊຸກຍູ້, ຊີ້ນຳຊາວກະສິກອນ ໂດຍເລີ່ມແຕ່ເວລາ ກະກຽມລົງມືທຳການຜະລິດ ຈົນຮອດເວລາເກັບກ່ຽວ, ຕະຫລອດຮອດການເກັບຮັກສາ, ການປຸງແຕ່ງເບື້ອງຕົ້ນ ແລະການຫຸ້ມຫໍ່, ຂົນສົ່ງໄປສູ່ຕະຫລາດ.

ນອກຈາກນີ້ ລັດຍັງສົ່ງເສີມໃຫ້ພາກສ່ວນອື່ນ ກໍ່ສ້າງນັກວິຊາການດ້ານກະສິກຳອີກດ້ວຍ.

## ມາດຕາ 57. ຂໍ້ມູນຂ່າວສານ ທາງດ້ານກະສິກຳ

ລັດຕ້ອງຕອບສະໜອງຂໍ້ມູນຂ່າວສານ, ສະຖິຕິ ກ່ຽວກັບການຜະລິດກະສິກຳ ເຊັ່ນ: ເຕັກນິກການປູກຝັງ, ລ້ຽງສັດ ແລະ ການປະມົງ, ແນວພັນພືດ ແລະ ແນວພັນສັດ, ຄຸນນະພາບ ແລະ ມາດຕະຖານສາກົນ, ການເໜັງຕີງຂອງລາຄາ ໃນທ້ອງຕະຫລາດ, ຂໍ້ມູນກ່ຽວກັບອຸຕຸນິຍົມ, ອຸທົກກະສາດ ແລະ ອື່ນໆ, ສ້າງລະບົບເກັບກຳຂໍ້ມູນ, ຂ່າວສານ, ສະຖິຕິແຕ່ຂັ້ນບ້ານ, ຫົວໜ່ວຍຮາກຖານຂຶ້ນມາ ເພື່ອໃຫ້ມີຂໍ້ມູນຕົວຈິງ. ພ້ອມກັນນັ້ນລັດກໍຊຸກຍູ້ໃຫ້ພາກສ່ວນອື່ນ ປະກອບສ່ວນໃນການສະໜອງຂໍ້ມູນຂ່າວສານ ທາງດ້ານກະສິກຳ.

### ມາດຕາ 58. ສູນຄົ້ນຄວ້າ ແລະ ສະຖານີທົດລອງ

ສູນຄົ້ນຄວ້າ ແລະ ສະຖານີທົດລອງມີບົດບາດໃນການຄົ້ນຄວ້າ, ນຳໃຊ້ບົດຮຽນທີ່ດີ ຢູ່ພາຍໃນປະເທດ ແລະ ນຳເອົາຜົນສຳເລັດຂອງສາກົນທາງດ້ານກະສິກຳເຂົ້າມານຳໃຊ້ ພາຍໃນປະເທດເພື່ອເພີ່ມທະວີປະສິດທິຜົນຂອງຜົນຜະລິດກະສິກຳ.

ສູນຄົ້ນຄວ້າ ແລະ ສະຖານີທົດລອງມີໜ້າທີ່ໃນການຄົ້ນຄວ້າ ແລະ ທົດລອງແນວພັນພືດ ແລະ ແນວພັນສັດ, ຝຸ່ນ ແລະ ອາຫານສັດ, ຢາປາບສັດຕູພືດ ແລະຢາປົວສັດ, ເຕັກນິກການຜະລິດພາຫະນະກົນຈັກການກະເສດລວມທັງເຕັກນິກຂອງການປູກຝັງ ແລະ ລ້ຽງສັດ.

ລັດສົ່ງເສີມການສ້າງ ແລະ ຂະຫຍາຍສູນຄົ້ນຄວ້າ ແລະ ສະຖານີທົດລອງໃນເຂດການຜະລິດຕ່າງໆ ທີ່ເຫັນວ່າເໝາະສົມ.

### ມາດຕາ 59. ການຝຶກອົບຮົມຊາວກະສິກອນ

ເພື່ອເຮັດໃຫ້ ການຜະລິດກະສິກຳ ມີປະສິດທິພາບ ແລະ ສາມາດເປັນສິນຄ້າໄດ້ ລັດເອົາໃຈໃສ່ຝຶກອົບຮົມຊາວກະສິກອນ ກ່ຽວກັບການປູກຝັງ, ລ້ຽງສັດ ແລະ ການປະມົງ ໃຫ້ຮູ້ຈັກ ນຳໃຊ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີ ໃໝ່ຢ່າງກວ້າງຂວາງໃນການຜະລິດກະສິກຳ ດ້ວຍການຈັດການຝຶກອົບຮົມ, ທັດສະນະສຶກສາ ແລະ ສຳມະນາຢູ່ພາຍໃນ ແລະ ຕ່າງປະເທດ, ຮຽນຮູ້ມາດຕະຖານສາກົນ ກ່ຽວກັບຜະລິດຕະພົນ ກະສິກຳ. ນອກຈາກນີ້ ກໍເອົາບົດຮຽນ ທີ່ດີຈາກຄອບຄົວຕົວແບບ ແລະ ຫົວໜ່ວຍການຜະລິດກະສິກຳ ຢູ່ພາຍໃນ ມາເຜີຍແຜ່ຮ່ຳຮຽນ, ຜັນຂະຫຍາຍໃຫ້ກວ້າງຂວາງ ແລະ ທັນເວລາ.

ລັດສົ່ງເສີມໃຫ້ພາກສ່ວນຕ່າງໆ ມີສ່ວນຮ່ວມໃນການຝຶກອົບຮົມຊາວກະສິກອນ ກ່ຽວກັບການຜະລິດກະສິກຳ.

ລັດຈະນຳເອົາວິຊາກະສິກຳພື້ນຖານເຂົ້າໃນຫລັກສູດການສຶກສາ.

### ມາດຕາ 60. ສາງ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງ

ເພື່ອຮັກສາຜະລິດຕະພົນກະສິກຳໃຫ້ຢູ່ໃນສະພາບຄົງຕົວ ແລະ ເກັບຮັກສາໄວ້ໄດ້ຍາວນານ ລັດສົ່ງເສີມໃຫ້ປະຊາຊົນສ້າງສາງ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງຜົນຜະລິດກະສິກຳເບື້ອງຕົ້ນຢ່າງກ້ວາງຂວາງ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ.

ກະຊວງກະສິກຳ ແລະ ປ່າໄມ້ ມີໜ້າທີ່ແນະນຳ, ຝຶກອົບຮົມທາງດ້ານວິຊາການ ກ່ຽວກັບລະບົບສາງ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງເບື້ອງຕົ້ນໃຫ້ປະຊາຊົນ.

### ມາດຕາ 61. ທະນາຄານເມັດພືດ ແລະ ທະນາຄານສັດ

ເພື່ອຮັບປະກັນໃຫ້ຊາວກະສິກອນມີທຶນຮອນທຳການຜະລິດ ແລະ ໃຊ້ຈ່າຍໃນຄອບຄົວ ລັດຊຸກຍູ້, ສົ່ງເສີມໃຫ້ມີການສ້າງຕັ້ງທະນາຄານເມັດພືດ ແລະ ທະນາຄານສັດ ເພື່ອຕອບສະໜອງຄວາມຕ້ອງການຂອງຊາວກະສິກອນ ໃນເວລາຈຳເປັນ ດ້ວຍການນຳເອົາຜົນຜະລິດຂອງຕົນ ໄປເປັນຫລັກ

ຊັບຄ້ຳປະກັນ ເພື່ອກູ້ຢືມເງິນ ແລະ ຊາວກະສິກອນ ມີສິດ ນຳເອົາຜະລິດຕະພົນ ທີ່ນຳໄປຄ້ຳປະກັນນັ້ນ ອອກຈຳໜ່າຍໃນເວລາພົນຜະລິດມີລາຄາສູງ.

ນອກຈາກນີ້ ທະນາຄານເມັດພືດ ແລະ ທະນາຄານສັດ ຍັງມີຈຸດປະສົງໃຫ້ຊາວກະສິກອນສາມາດກູ້ຢືມເມັດພືດ ຫລືສັດໄປນຳໃຊ້ໃນເວລາທີ່ຈຳເປັນ.

### ມາດຕາ 62. ການຕະຫລາດ

ການຈໍລະຈອນແຈກຢາຍສິນຄ້າ ມີຄວາມສຳຄັນໃນການກະຕຸກຊຸກຍູ້ ການຜະລິດສິນຄ້າ ແລະ ການຜະລິດສຳເປີດກ້ວາງ ດັ່ງນັ້ນລັດຊຸກຍູ້ໃຫ້ພາກສ່ວນເສດຖະກິດຕ່າງໆ ຊອກຫາຕະຫລາດພາຍໃນ ແລະ ຕ່າງປະເທດ ດ້ວຍການໂຄສະນາສິນຄ້າ, ການເປີດການວາງສະແດງສິນຄ້າກະສິກຳ ແລະ ເປີດກ້ວາງການພົວພັນກັບສາກົນ ກ່ຽວກັບການຊື້-ຂາຍ, ແລກປ່ຽນສິນຄ້າກະສິກຳ. ນອກຈາກນີ້ ລັດຍັງຊຸກຍູ້ການຜະລິດກະສິກຳຂອງປະຊາຊົນ ດ້ວຍການຜູກພັນສອງສົ້ນ ລວມທັງສົ່ງເສີມການສ້າງຕັ້ງສະຫະກອນ ແລະ ບໍລິສັດຂອງລັດເພື່ອຜູກພັນຊື້-ຂາຍພົນຜະລິດກະສິກຳ.

ການນຳພົນຜະລິດກະສິກຳເຂົ້າມາໃນປະເທດ ຫລື ສົ່ງອອກນອກປະເທດຕ້ອງປະຕິບັດໃຫ້ຖືກຕ້ອງຕາມ ລະບຽບກົດໝາຍ.

### ມາດຕາ 63. ລາຄາ

ລັດຮັບປະກັນລາຄາຕ່ຳສຸດ ສຳລັບສິນຄ້າ ກະສິກຳບາງຊະນິດທີ່ຈຳເປັນແກ່ການດຳລົງຊີວິດຂອງປະຊາຊົນ.

ໃນກໍລະນີທີ່ຈຳເປັນ ລັດຈະໄປເກັບຊື້ ຜະລິດຕະພົນກະສິກຳດັ່ງກ່າວເພື່ອຮັກສາລາຄາໃຫ້ໝັ້ນທ່ຽງເປັນຕົ້ນໃນລະດູການ ເກັບກ່ຽວ. ນອກຈາກນີ້ ລັດຕ້ອງຊອກທຸກວິທີທາງ ເພື່ອສະກັດກັ້ນການກົດໜ່ວງລາຄາສິນຄ້າກະສິກຳ, ທັງໝົດເຫລົ່ານີ້ ແນໃສ່ປົກປ້ອງພົນປະໂຫຍດຂອງຜູ້ຜະລິດ ແລະ ຜູ້ບໍລິໂພກ.

### ມາດຕາ 64. ການປົກປ້ອງພົນປະໂຫຍດຂອງຊາວກະສິກອນ

ລັດເອົາໃຈໃສ່ປົກປ້ອງພົນປະໂຫຍດຂອງຊາວກະສິກອນ ດ້ວຍການຊຸກຍູ້ການຂະຫຍາຍການຜະລິດ ແລະ ການຊົມໃຊ້ຜະລິດຕະພົນ ກະສິກຳພາຍໃນປະເທດ, ການຫລຸດຜ່ອນ ແລະ ຈຳກັດການນຳເຂົ້າຜະລິດຕະພົນກະສິກຳ ຈາກຕ່າງປະເທດທີ່ບໍ່ຈຳເປັນ ລວມທັງການນຳໃຊ້ມາດຕະການສົ່ງເສີມ ຕ່າງໆ ທີ່ໄດ້ກຳນົດໄວ້ໃນພາກທີ IV ຂອງກົດໝາຍສະບັບນີ້.

## ພາກທີ V ການປົກປັກຮັກສາສິ່ງແວດລ້ອມ

### ມາດຕາ 65. ການປົກປັກຮັກສາສິ່ງແວດລ້ອມ

ບຸກຄົນ ແລະ ການຈັດຕັ້ງທີ່ດໍາເນີນກິດຈະການກະສິກໍາປະເພດຕ່າງໆຈະຕ້ອງໄດ້ເອົາໃຈໃສ່ປົກປັກຮັກສາ ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທໍາມະຊາດເຊັ່ນ: ຄົນ, ສັດ, ດິນ, ນໍ້າ, ປ່າໄມ້, ອາກາດ.

### ມາດຕາ 66. ການປົກປັກຮັກສາສິ່ງແວດລ້ອມໃນການປູກຝັງ

ການບຸກເບີກ, ກຸ່ມ ແລະ ນໍາໃຊ້ດິນ, ການກໍ່ສ້າງກິດຈະການຊົນລະປະທານ ແລະ ການນໍາໃຊ້ນໍ້າ, ການ ນໍາໃຊ້ຝຸ່ນ ແລະ ການເກັບຮັກສາຢາປາບສັດຕູພືດ ຕ້ອງຈໍາກັດຜົນກະທົບອັນບໍ່ດີຕໍ່ຄົນ, ສັດ, ດິນ, ນໍ້າ, ປ່າໄມ້ ແລະອາ ກາດ.

### ມາດຕາ 67. ການປົກປັກຮັກສາສິ່ງແວດລ້ອມໃນການລ້ຽງສັດ

ການລ້ຽງສັດຕ້ອງຈັດຢູ່ໃນສະຖານທີ່ ທີ່ເຫມາະສົມ, ບໍ່ຄວນເຮັດຄອກສັດໃສ່ກ້ອງຕະລ່າງເຮືອນ ຫລືເຮັດຄອກສັດໃກ້ນໍ້າສ້າງ ຫລືໃກ້ຫ້ວຍ, ຫນອງ, ຄອງ, ບຶງຂອງສາທາລະນະ. ການລ້ຽງສັດຕ້ອງເອົາໃຈໃສ່ອະນາໄມຄອກສັດຢ່າງເປັນປະຈໍາ ເພື່ອຫລີກເວັ້ນຈາກມົນພາວະທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມ. ບໍ່ໃຫ້ລ້ຽງສັດຕາມແຄມທາງຫລວງແຫ່ງຊາດ, ການລ້ຽງສັດຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງຮັກສາ ເພື່ອບໍ່ໃຫ້ທໍາລາຍຜົນລະປູກຂອງຜູ້ອື່ນ ຫລື ບໍ່ໃຫ້ເກີດອຸປະຕິເຫດບົນທ້ອງຖະຫນົນ.

### ມາດຕາ 68. ການປົກປັກຮັກສາສິ່ງແວດລ້ອມໃນ ການ ປະມົງ

ການປະມົງ ຕ້ອງຮັບປະກັນການປົກປັກຮັກສາ ແລະ ຂະຫຍາຍແນວພັນປາ ແລະ ສັດນໍ້າອື່ນໆ, ບໍ່ໃຫ້ນໍາໃຊ້ອຸປະກອນ ຫຼືວິທີການທີ່ມີລັກສະນະທໍາລາຍ, ດັບສູນພັນປາ ແລະ ສັດນໍ້າອື່ນໆ ເຊັ່ນ: ຢາເບື່ອ, ລະເບີດ, ໄຟຟ້າ, ແຫຖີ່, ມອງຖີ່, ໜ້າກາກ ລວມທັງການນໍາໃຊ້ຕ້ອນ, ລີ່, ໂຕ່ງ, ຕາມຫ້ວຍຮ່ອງເພື່ອຮີບໂຮມເອົາປານ້ອຍ, ປາໃຫຍ່ ເປັນຕົ້ນແມ່ນໃນລະດູແຜ່ພັນ.

ການລ້ຽງປາ ແລະ ສັດນໍ້າອື່ນໆ ຕ້ອງຮັກສາບໍ່ໃຫ້ນໍ້າເນົ່າເຫມັນ ຊຶ່ງຈະເປັນອັນຕະລາຍຕໍ່ສິ່ງແວດລ້ອມ.

## ພາກທີ VI ການຄຸ້ມຄອງ ແລະກວດກາກິດຈະການກະສິກໍາ

## ຫມວດທີ 1 ການຄຸ້ມຄອງກິດຈະການກະສິກໍາ

### ມາດຕາ 69. ອົງການຄຸ້ມຄອງກິດຈະການກະສິກໍາ

ອົງການຄຸ້ມຄອງ ກິດຈະການກະສິກໍາ ປະກອບມີ :

- ກະຊວງ ກະສິກຳ ແລະ ປ່າໄມ້;

- ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະເຂດພິເສດ;

- ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ;

- ອຳນາດການປົກຄອງບ້ານ.

ໃນກໍລະນີທີ່ຈຳເປັນ ກໍອາດຈະຈັດຕັ້ງຄະນະກຳມະການສະເພາະຂຶ້ນຕື່ມອີກ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງກິດຈະການ ກະສິກຳ.

## ມາດຕາ 70. ສິດ ແລະ ໜ້າທີ່ຂອງ ກະຊວງກະສິກຳ ແລະ ປ່າໄມ້

ສິດ ແລະ ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້ກ່ຽວກັບການຄຸ້ມຄອງກິດຈະການກະສິກຳມີດັ່ງຕໍ່ໄປນີ້:

- ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຜັນຂະຫຍາຍຍຸດທະສາດ ກ່ຽວກັບການຜະລິດກະສິກຳໃຫ້ກາຍເປັນແຜນການ, ໂຄງການລະອຽດ ແລະ ລະບຽບການ ເພື່ອຄຸ້ມຄອງ ແລະ ກວດກາກິດຈະການກະສິກຳ;

- ສ້າງຮ່າງແຜນແມ່ບົດ, ແຜນໄລຍະຍາວ, ໄລຍະກາງ, ໄລຍະສັ້ນ ແລະ ບັນດາໂຄງການກ່ຽວກັບການພັດທະນາ ການຜະລິດກະສິກຳ;

- ວາງຂໍ້ກຳນົດ, ກົດລະບຽບ ກ່ຽວກັບການຜະລິດ, ການຮັກສາສິ່ງແວດລ້ອມ ແລະ ການພັດທະນາ ກິດຈະການ ກະສິກຳ ໃນຂອບເຂດທົ່ວປະເທດ;

- ຄົ້ນຄ້ວາ ແລະ ມີຄຳເຫັນກ່ຽວກັບຄຳຮ້ອງຂໍດຳເນີນທຸລະກິດ ກະສິກຳ ຂະໜາດໃຫຍ່ ຫລືມີຄວາມສຳຄັນ;

- ຄົ້ນຄ້ວາວິທະຍາສາດ ເຕັກນິກດ້ານກະສິກຳ, ສ້າງຕາໜ່າງສູນຄົ້ນຄວ້າ ແລະ ສະຖານີທົດລອງ ແລະ ໜ່ວຍສົ່ງເສີມກະສິກຳໃນທົ່ວປະເທດ, ສະໜອງຂໍ້ມູນຂ່າວສານສະຖິຕິທາງດ້ານກະສິກຳ, ອຸຕຸນິຍົມ ແລະ ອຸທົກກະສາດ;

- ປະສານສົມທົບກັບ ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສຳຫລວດທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ແລະ ເຂດຈຸດສຸມກະສິກຳ;

- ກວດກາກິດຈະການ ກະສິກຳໃນການປະຕິບັດ ລະບຽບ, ກົດໝາຍ, ມາດຕະ ຖານເຕັກນິກຕ່າງໆ ເພື່ອໃຫ້ການຜະລິດມີປະສິດທິຜົນ;

- ກໍ່ສ້າງ, ບຳລຸງ ແລະ ຍົກລະດັບນັກວິຊາການ ຂັ້ນກາງ ແລະ ຂັ້ນສູງ ໂດຍປະສານສົມທົບກັບມະຫາວິທະຍາໄລແຫ່ງຊາດ ລວມທັງຊີ້ນຳການກໍ່ສ້າງ ແລະ ຍົກລະດັບໃຫ້ນັກວິຊາການຂັ້ນຕົ້ນ ແລະ ຊາວກະສິກອນທົ່ວໄປ;

- ຮ່ວມມືກັບຕ່າງປະເທດທາງດ້ານການພັດທະນາກະສິກຳ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການຄຸ້ມຄອງກິດຈະການກະສິກຳໃນຂອບເຂດທີ່ຕົນຮັບຜິດຊອບ.

**ມາດຕາ 71. ສິດ ແລະ ໜ້າທີ່ຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນແລະເຂດພິເສດ**

ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ແລະ ເຂດພິເສດກ່ຽວກັບການຄຸ້ມຄອງກິດຈະການກະສິກຳມີດັ່ງຕໍ່ໄປນີ້ :

- ເປັນເສນາທິການໂດຍກົງໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອຳນາດການປົກຄອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ກ່ຽວກັບວຽກງານກະສິກຳ;
- ຜັນຂະຫຍາຍແຜນແມ່ບົດ, ແຜນໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ ໃຫ້ເປັນໂຄງການອັນລະອຽດ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດ;
- ກໍ່ສ້າງ, ບຳລຸງ ຍົກລະດັບນັກວິຊາການກະສິກຳຂັ້ນຕົ້ນໃຫ້ເມືອງ ແລະ ຊາວກະສິກອນພາຍໃນແຂວງ;
- ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບຄຳຮ້ອງຂໍດຳເນີນທຸລະກິດ ກະສິກຳ ໃນຂອບເຂດທີ່ຕົນຮັບຜິດຊອບ;
- ສຳຫລວດ ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ແລະ ຈຸດສຸມກະສິກຳ ລວມທັງການຈັດສັນທີ່ດິນ ກະສິກຳໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການຄຸ້ມຄອງກິດຈະການກະສິກຳໃນຂອບເຂດທີ່ຕົນຮັບຜິດຊອບ.

**ມາດຕາ 72. ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະສິກຳມີດັ່ງຕໍ່ໄປນີ້:

- ເປັນເສນາທິການໂດຍກົງໃຫ້ພະແນກກະສິກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ແລະ ອຳນາດການປົກຄອງເມືອງ ໃນການຈັດຕັ້ງປະຕິບັດແຜນການ, ຂໍ້ກຳນົດ, ກົດລະບຽບ ແລະ ຄຳແນະນຳ ຂອງພະແນກກະສິກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດກ່ຽວກັບການຜະລິດກະສິກຳ;
- ຈັດຕັ້ງ ປະຕິບັດຕົວຈິງ ແຜນການໄລຍະຍາວ, ໄລຍະກາງ, ໄລຍະສັ້ນ ແລະ ໂຄງການຕ່າງໆ ກ່ຽວກັບການພັດທະນາກະສິກຳຢູ່ໃນແຕ່ລະບ້ານ;
- ສຳຫລວດທ່າແຮງ ທາງດ້ານຊັບພະຍາກອນທຳມະຊາດ ແລະ ຈຸດສຸມກະສິກຳລວມທັງການຈັດສັນທີ່ດິນກະສິກຳໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ຝຶກອົບຮົມ ແລະແນະນຳເຕັກນິກກະເສດສຸມໃນການປູກຝັງ, ການລ້ຽງສັດ ແລະການປະມົງໃຫ້ແກ່ປະຊາຊົນ;
- ປະຕິບັດສິດ ແລະໜ້າທີ່ອື່ນໆ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະສິກຳ.

### ມາດຕາ 73. ສິດ ແລະ ໜ້າທີ່ຂອງອຳນາດການປົກຄອງບ້ານ

ສິດ ແລະ ໜ້າທີ່ຂອງອຳນາດການປົກຄອງບ້ານກ່ຽວກັບການຈັດຕັ້ງປະຕິບັດວຽກງານກະສິກຳມີດັ່ງຕໍ່ໄປນີ້:

- ຈັດຕັ້ງປະຕິບັດຕົວຈິງແຜນການ, ກິດຈະການ, ຂໍ້ກຳນົດ, ກົດລະບຽບ, ຄຳແນະນຳ ຂອງຫ້ອງການ ກະສິກຳ- ປ່າໄມ້ເມືອງ ແລະ ອຳນາດການປົກຄອງເມືອງ ກ່ຽວກັບການຜະລິດກະສິກຳ;
- ປຸກລະດົມ, ຊຸກຍູ້ຄອບຄົວຊາວກະສິກອນ ໃຫ້ດຳເນີນການຜະລິດ ສະບຽງອາຫານ ໃຫ້ກຸ້ມກິນ, ມີ ສ່ວນແຮໄວ້ ແລະ ເປັນສິນຄ້າ ດ້ວຍວິທີການເຮັດກະເສດສຸມ, ເປັນຕົ້ນເຜີຍແຜ່ການນຳໃຊ້ເຕັກນິກການຜະລິດແບບໃຫມ່ທີ່ທັນສະໄໝ ແລະ ນຳພາປະຊາຊົນເຮັດຕົວຈິງໃຫ້ໄດ້ຮັບໝາກຜົນດີ;
- ຈັດສັນສະຖານທີ່ການປູກຝັງ ແລະ ລ້ຽງສັດຂອງແຕ່ລະຄອບຄົວພາຍໃນບ້ານ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະສິກຳທີ່ຫ້ອງການກະສິກຳ ແລະປ່າໄມ້ເມືອງ ແລະອຳນາດການປົກຄອງເມືອງມອບໝາຍໃຫ້.

## ໝວດທີ 2 ການກວດກາກິດຈະການກະສິກຳ

### ມາດຕາ 74. ການກວດກາກິດຈະການກະສິກຳ

ການກວດກາກິດຈະການກະສິກຳ ແມ່ນການກວດເບິ່ງ ການເຄື່ອນໄຫວການຜະລິດກະສິກຳເພື່ອໃຫ້ດຳເນີນໄປຢ່າງຖືກຕ້ອງຕາມເປົ້າໝາຍ, ຕາມກົດໝາຍ ວ່າດ້ວຍກະສິກຳ, ລະບຽບ ແລະ ກົດໝາຍອື່ນໆ ແນໃສ່ຮັບປະກັນ ໃຫ້ການຜະລິດ ກະສິກຳ ມີປະສິດທິຜົນ ທັງຮັບປະກັນຄວາມປອດໄພ ແລະການປົກປັກຮັກສາສິ່ງແວດລ້ອມ ໄດ້ເປັນຢ່າງດີອີກດ້ວຍ.

### ມາດຕາ 75. ອົງການກວດກາກິດຈະການກະສິກຳ

ໃນຂະແໜງກະສິກຳ ແລະ ປ່າໄມ້ ຄຽງຄູ່ກັບອົງການຄຸ້ມຄອງກິດຈະການກະສິກຳ ນັ້ນ ຍັງມີອົງການກວດກາກິດຈະການກະສິກຳອີກດ້ວຍ.

ໃນກໍລະນີທີ່ຈຳເປັນກໍອາດຈະຈັດຕັ້ງຄະນະກຳມະການສະເພາະຂຶ້ນ ຊຶ່ງປະກອບດ້ວຍຫຼາຍພາກສ່ວນ ເພື່ອກວດກາໂຄງການ ແລະກິດຈະການກະສິກຳໃນບາງບໍລິເວນ ທີ່ລະເມີດແນວທາງນະໂຍບາຍ ແລະລະບຽບກົດໝາຍ.

### ມາດຕາ 76. ເນື້ອໃນການກວດກາ

ການກວດກາກິດຈະການ ກະສິກຳ ມີເນື້ອໃນຕົ້ນຕໍດັ່ງນີ້ :

- ການປະຕິບັດຕາມແຜນການທີ່ວາງອອກ;
- ການປະຕິບັດເປົ້າໝາຍການຜະລິດ;
- ປະສິດທິຜົນຂອງການຜະລິດ;
- ການປະຕິບັດລະບຽບກົດໝາຍກ່ຽວກັບການຜະລິດ;

- ການປະຕິບັດພັນທະກ່ຽວກັບການຜະລິດ;
- ການປະຕິບັດມາດຕະການຄວາມປອດໄພໃນການຜະລິດ;
- ການປົກປັກຮັກສາສິ່ງແວດລ້ອມ.

### ມາດຕາ 77. ວິທີການກວດກາ.

ການກວດກາ ກິດຈະການ ກະສິກຳອາດຈະດຳເນີນດ້ວຍວິທີ ກວດກາຕາມລະບົບປົກກະຕິ, ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຫລືກວດກາແບບກະທັນຫັນ ແລ້ວແຕ່ກໍລະນີ.

ສຳລັບການກວດກາທາງດ້ານເຕັກນິກ ແລະ ວິຊາສະເພາະນັ້ນກະຊວງກະສິກຳ ແລະ ປ່າໄມ້ ອາດຈະຈັດຕັ້ງຄະນະກຳມະການ ກວດກາເຕັກນິກ ແລະວິຊາສະເພາະຂຶ້ນ ຊຶ່ງປະກອບດ້ວຍ ພະນັກງານວິຊາການດ້ານເຕັກນິກ ແລະ ວິຊາສະເພາະທີ່ກ່ຽວຂ້ອງ ຊຶ່ງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ແຕ່ງຕັ້ງ.

ໃນການກວດກາກິດຈະການກະສິກຳ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ຂະແໜງອຸດສາຫະກຳ ແລະຫັດຖະກຳ, ອົງການວິທະຍາສາດ, ເຕັກໂນໂລຊີ ແລະສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ ແລະ ອຳນາດການປົກຄອງທ້ອງຖິ່ນ.

## ພາກທີ VII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 78. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການສຶກສາຄົ້ນຄວ້າ ວິທະຍາສາດເຕັກນິກ ເຂົ້າຮັບໃຊ້ການຜະລິດກະສິກຳ, ໃນການຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາການຜະລິດກະສິກຳຢ່າງມີປະສິດທິຜົນທັງເປັນຕົວແບບໃຫ້ແກ່ບ້ານ, ເມືອງ, ແຂວງ ຫລື ທົ່ວປະເທດ, ປົກປັກຮັກສາສິ່ງແວດລ້ອມ ແລະ ດຳເນີນກິດຈະການກະສິກຳຖືກຕ້ອງຕາມລະບຽບກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ເຊັ່ນ: ນະໂຍບາຍສິນເຊື່ອ, ຫລຸດຜ່ອນ ຫລື ຍົກເວັ້ນພາສີ, ອາກອນ ແລະ ນະໂຍບາຍອື່ນໆ ຊຶ່ງລັດຖະບານເປັນຜູ້ກຳນົດລະອຽດ.

### ມາດຕາ 79. ມາດຕະການ ຕໍ່ຜູ້ລະເມີດ

ຜູ້ລະເມີດກົດໝາຍ ສະບັບນີ້ ຈະຖືກປະຕິບັດມາດຕະການ ດ້ວຍການສຶກສາອົບຮົມ, ການປັບໃໝ ຫລື ດ້ວຍການລົງໂທດຕາມກົດໝາຍ.

### ມາດຕາ 80. ມາດຕະການສຶກສາອົບຮົມ

ບຸກຄົນ ຫລືການຈັດຕັ້ງ ຫາກໄດ້ລະເມີດກົດໝາຍ ສະບັບນີ້ ໃນສະຖານເບົາເຊັ່ນ: ບໍ່ລາຍງານຜົນການດຳເນີນກິດຈະການກະສິກຳ ຕາມສັນຍາ, ບໍ່ລາຍງານການແຜ່ລະບາດພະຍຸສັດ, ປະຕິ

ບັດງານບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ການລະເມີດໃນສະຖານເບົາອື່ນໆ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 81. ມາດຕະການປັບໃໝ

ບຸກຄົນ ຫລືການຈັດຕັ້ງ ຫາກໄດ້ລະເມີດກົດໝາຍ ສະບັບນີ້ ຈະຖືກປັບໃໝທົບເທົ່າ ຕາມມູນຄ່າຂອງຄວາມເສັຽຫາຍຕົວຈິງ ດ້ວຍການກະທຳຜິດໃດໜຶ່ງ ດັ່ງຕໍ່ໄປນີ້:

- ດຳເນີນທຸລະກິດກະສິກຳ ໂດຍບໍ່ມີໃບອະນຸຍາດ ສຳລັບ ທຸລະກິດທີ່ຕ້ອງໄດ້ຂໍອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍທຸລະກິດ ຫລືບໍ່ຕໍ່ໃບອະນຸຍາດ ທີ່ໝົດອາຍຸ;
- ລາຍງານບໍ່ຖືກຕ້ອງຕາມຄວາມຈິງ;
- ບໍ່ປະຕິບັດ ຕາມມາດຕະການຄວາມປອດໄພ ທາງດ້ານວິຊາການ ແລະ ກໍ່ຄວາມ ເສັຽຫາຍໃຫ້ຜູ້ອື່ນ;
- ບໍ່ນຳໃຊ້ມາດຕະການ ສະກັດກັ້ນຜົນກະທົບຕໍ່ສິ່ງແວດລ້ອມ;
- ສ້າງຄວາມເສັຽຫາຍ ໃຫ້ແກ່ການຜະລິດ ທີ່ເກີດມາຈາກຄວາມຜິດພາດຂອງຕົນເຊັ່ນ: ເຮັດໃຫ້ດິນກະສິກຳເສື່ອມຄຸນນະພາບ, ບໍ່ສະກັດກັ້ນ ການແຜ່ຂະຫຍາຍ ພະຍາດພືດ ຫລືພະຍາດສັດ, ສ້າງຄວາມເສັຽຫາຍໃຫ້ແກ່ການຜະລິດຂອງຜູ້ອື່ນ, ລະບົບນ້ຳຊົນລະປະທານ, ຫ້ວຍ, ຮ່ອງ, ຄອງ, ບຶງ ແລະ ອື່ນໆ;
- ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ຄຸ້ມຄອງ ແລະ ກວດກາ ກິດຈະການກະສິກຳ ຫລື ບໍ່ ປະຕິບັດຕາມສັນຍາ ເຮັດການຜະລິດກະສິກຳ.

### ມາດຕາ 82. ມາດຕະການ ທາງອາຍາ

ບຸກຄົນຜູ້ໃດຫາກໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາເຊັ່ນ: ການປອມແປງໃບອະນຸຍາດ ດຳເນີນກິດຈະການກະສິກຳ , ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ບໍ່ປະຕິບັດຕາມມາດຕະການຄວາມປອດໄພ ຊຶ່ງພາໃຫ້ມີຄົນເສັຽຊີວິດ, ເສັຽສຸຂະພາບ ຫລື ພາໃຫ້ເກີດມີຄວາມເສັຽຫາຍ ຕໍ່ຊັບສິນຂອງລັດ, ຂອງລວມໝູ່ ຫລືຂອງປະຊາຊົນ ກໍຈະຖືກລົງໂທດຕາມກົດໝາຍອາຍາ.

### ມາດຕາ 83. ມາດຕະການໂທດເພີ່ມ

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 81 ແລະ 82 ເທິງນີ້ ແລ້ວຜູ້ລະເມີດ ທີ່ໄດ້ກໍ່ຄວາມເສັຽຫາຍຢ່າງຮ້າຍແຮງ ຕໍ່ຊັບສິນຂອງລັດ, ສິ່ງແວດລ້ອມສັງຄົມ ຫລືທຳມະຊາດ ຈະຖືກປະຕິບັດມາດຕະການໂທດເພີ່ມອີກເຊັ່ນ: ໂຈະກິດຈະການກະສິກຳ, ຖອນໃບອະນຸຍາດ, ຮິບພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດນັ້ນ.

## ພາກທີ VIII ບົດບັນຍັດສຸດທ້າຍ

**ມາດຕາ 84. ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 85. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ມື້ປະທານປະເທດ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ບັນດາຂໍ້ກຳນົດ ແລະ ບົດບັນຍັດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ່ 10 ຕຸລາ 1998
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ